ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ເອກະສານລາຍງານການເງິນ

31 ທັນວາ 2025

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ເອກະສານລາຍງານການເງິນ
31 ທັນວາ 2025

ສາລະບານ	**ໜ້າ**
ບົດລາຍງານຂອງຜູ້ກວດສອບອິດສະຫຼະ	1-5
ໃບລາຍງາຍຖານະການເງິນ	6 - 7
ໃບລາຍງານຜົນໄດ້ຮັບ	8
ໃບລາຍງານສ່ວນປ່ຽນແປງທຶນ	9
ໃບລາຍງານກະແສເງິນສົດ	10 - 11
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ	12 - 33

ບົດລາຍງານຂອງຜູ້ກວດສອບອິດສະຫຼະ

ເຖິງ: ສະພາຜູ້ອຳນວຍການ ແລະ ຜູ້ຖືຮຸ້ນ ຂອງ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ບໍລິສັດ

ຄຳເຫັນຂອງພວກເຮົາ

ພວກເຮົາມີຄຳເຫັນວ່າເອກະສານລາຍງານການເງິນ ຂອງ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ບໍລິສັດ) ວັນທີ 31 ທັນວາ 2025 ໄດ້ຖືກສ້າງຂຶ້ນໄດ້ຢ່າງຖືກຕ້ອງ ແລະ ສອດຄ່ອງກັບນະໂຍບາຍການບັນຊີ ເຊິ່ງອະທິບາຍໃນ ບົດອະທິບາຍຊ້ອນທ້າຍ ຂໍ້ທີ 2 ຂອງເອກະສານລາຍງານສະບັບນີ້.

ການກວດສອບຂອງພວກເຮົາມີດັ່ງນີ້:

ເອກະສານລາຍງານການເງິນຂອງ ບໍລິສັດ ປະກອບດ້ວຍ:

- ໃບລາຍງານຖານະການເງິນ ວັນທີ 31 ທັນວາ 2025;
- ໃບລາຍງານຜົນໄດ້ຮັບສຳລັບທ້າຍປີ;
- ໃບລາຍງານສ່ວນປ່ຽນແປງທຶນສຳລັບທ້າຍປີ;
- ໃບລາຍງານກະແສເງິນສົດສຳລັບທ້າຍປີ; ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ, ເຊິ່ງລວມມີນະໂຍບາຍການບັນຊີທີ່ສຳຄັນ ແລະ ຂໍ້ມູນອະທິບາຍອື່ນໆ.

ພື້ນຖານໃນການອອກຄຳເຫັນ

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs). ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ມາດຕະຖານການກວດສອບສາກົນໄດ້ລະບຸໄວ້ໃນວັກ ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນ ໃນບົດລາຍງານພວກເຮົາ.
ພວກເຮົາເຊື່ອວ່າພວກເຮົາໄດ້ຮັບຫຼັກຖານການກວດສອບພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການອອກຄຳເຫັນຂອງພວກເຮົາ.

ຄວາມເປັນອິດສະຫຼະ

ພວກເຮົາມີຄວາມເປັນອິດສະຫຼະ ຈາກບໍລິສັດ ຕາມຂໍ້ກຳນົດຈັນຍາບັນ ຂອງຜູ້ປະກອບວິຊາຊີບນັກບັນຊີ (ລວມເຖິງມາດຕະຖານຄວາມເປັນອິດສະຫຼະສາກົນ) ທີ່ກຳນົດໂດຍຄະນະກຳມະການຈັນຍາບັນ ນານາຊາດ ສຳລັບນັກບັນຊີ (IESBA Code) ຕາມທີ່ບັງຄັບໃຊ້ກັບການກວດສອບບັນຊີເອກະສານລາຍງານການເງິນ ຂອງບໍລິສັດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ. ພວກເຮົາໄດ້ປະຕິບັດຕາມຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ, ທີ່ສອດຄ່ອງກັບ ຈັນຍາບັນວິຊາຊີບນັກບັນຊີ (IESBA Code).

ຂໍ້ມູນ ແລະ ເຫດການທີ່ເນັ້ນ - ພື້ນຖານສ້າງເອກະສານລາຍງານການເງິນ

ພວກເຮົາໃຫ້ຂໍ້ສັງເກດຕໍ່ກັບບົດອະທິບາຍຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນ, ເຊິ່ງໄດ້ອະທິບາຍເຖິງພື້ນຖານການສ້າງເອກະສານລາຍງານການເງິນ. ເອກະສານລາຍງານການເງິນໄດ້ຖືກກະກຽມຕາມນະໂຍບາຍການບັນຊີຂອງບໍລິສັດ ເຊິ່ງອາດຈະແຕກຕ່າງຈາກມາດຕະຖານການລາຍງານການເງິນສາກົນ (IFRS). ດັ່ງນັ້ນ, ຜູ້ທີ່ນຳໃຊ້ ຄວນມີຄວາມເຂົ້າໃຈວ່າ ເອກະສານລາຍງານການເງິນນີ້ ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນ ແລະ ຜົນການດຳເນີນງານ ແລະ ກະແສເງິນສົດຕາມ IFRS. ຄວາມເຫັນຂອງພວກເຮົາບໍ່ໄດ້ມີການປ່ຽນແປງ ອັນເນື່ອງມາຈາກເລື່ອງທີ່ກ່າວມາຂ້າງເທິງນັ້ນ.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

ເລື່ອງສຳຄັນໃນການກວດສອບ

ເລື່ອງສຳຄັນໃນການກວດສອບ ແມ່ນ ເລື່ອງຕ່າງໆ ທີ່ມີຄວາມສຳຄັນທີ່ສຸດຕາມການປະເມີນໂດຍຄວາມຮູ້ຄວາມສາມາດຂອງພວກເຮົາໃນການກວດສອບເອກະສານລາຍງານການເງິນສຳລັບປີປັດຈຸບັນ. ພວກເຮົາກຳນົດ ເລື່ອງການກວດສອບທີ່ສຳຄັນ ໜຶ່ງເລື່ອງຄື: ການໂອນຊັບສິນສຸດທິຂອງ Plus Card ເພື່ອຫັກໜີ້ຂອງພາກສ່ວນກ່ຽວຂ້ອງ. ພວກເຮົາໄດ້ນຳເນື້ອໃນສຳຄັນເຫຼົ່ານີ້ມາລວມໃນການກວດສອບເອກະສານລາຍງານການເງິນ ເພື່ອສະແດງຄຳເຫັນຂອງພວກເຮົາ ພ້ອມນີ້ພວກເຮົາບໍ່ໄດ້ສະແດງຄຳເຫັນແຍກຕ່າງຫາກສຳລັບເລື່ອງເຫຼົ່ານີ້.

ເລື່ອງສຳຄັນໃນການກວດສອບ	ວິທີການກວດສອບ
ການໂອນຊັບສິນສຸດທິຂອງ Plus Card ເພື່ອຫັກໜີ້ຂອງພາກສ່ວນກ່ຽວຂ້ອງ ຕາມທີ່ໄດ້ເປີດເຜີຍໃນໝາຍເຫດ 3 ຂອງເອກະສານລາຍງານການເງິນ, ໃນລະຫວ່າງປີທີ່ສິ້ນສຸດວັນທີ 31 ທັນວາ 2025, ບໍລິສັດໄດ້ເຮັດຂໍ້ຕົກລົງ ແລະ ຕໍ່ມາໄດ້ແກ້ໄຂ ຂໍ້ຕົກລົງກັບຄອບຄົວສິດທິໄຊ (ຜູ້ຖືຫຸ້ນໃຫຍ່) ແລະ ບໍລິສັດ ສະຖາບັນການເງິນທີ່ຮັບເງິນຝາກ ຟີນະ ("FINA") ເພື່ອຊຳລະໜີ້ສິນຄ້າງຈ່າຍ ຜ່ານການໂອນຊັບສິນສຸດທິຂອງໜ່ວຍງານ Plus Card. ທຸລະກຳນີ້ປະກອບມີສອງສ່ວນ: • ການໂອນຊັບສິນຊັບສົມບັດຄົງທີ່ ແລະ ຊັບສິນບໍ່ມີຕົວຕົນ ທີ່ກ່ຽວຂ້ອງກັບການດຳເນີນງານ Plus Card ດ້ວຍຄ່າຕອບແທນທີ່ບໍ່ມີນັຍສຳຄັນ; ແລະ • ການຫັກລົບກັນລະຫວ່າງໜີ້ຕ້ອງຮັບ ທີ່ເກີດຈາກການດຳເນີນງານ Plus Card ກັບໜີ້ຕ້ອງສົ່ງໃຫ້ພາກສ່ວນກ່ຽວ ຂ້ອງ. ເນື່ອງຈາກທຸລະກຳນີ້ກ່ຽວຂ້ອງກັບ: • ການຊຳລະກັບພາກສ່ວນກ່ຽວຂ້ອງ ທີ່ຕ້ອງໄດ້ພິຈາລະນາຢ່າງເໝາະສົມໃນການເປີດເຜີຍຂໍ້ມູນ; • ການປ່ຽນແປງອັນທີ່ມີຜົນບັງຄັບໃຊ້ຫຼັງຈາກການແກ້ໄຂຂໍ້ຕົກລົງ ຊຶ່ງສົ່ງຜົນກະທົບຕໍ່ເວລາການຮັບຮູ້; • ການນຳໃຊ້ມູນຄ່າຕາມບັນຊີໃນອະດີດ (ສະຖານະວັນທີ 31 ທັນວາ 2024) ເປັນພື້ນຖານໃນການຊຳລະ; ແລະ • ການຢຸດການດຳເນີນງານ Plus Card ໃນປີນີ້. ເລື່ອງນີ້ເປັນສິ່ງສຳຄັນຕໍ່ການກວດສອບຂອງພວກເຮົາເນື່ອງຈາກ: • ທຸລະກຳນີ້ບໍ່ແມ່ນທຸລະກຳເກີດຂຶ້ນປົກກະຕິ ແລະ ຢູ່ນອກຂອບເຂດຂອງກິດຈະກຳດຳເນີນງານຂອງບໍລິສັດ; ແລະ • ມີຄວາມສ່ຽງທີ່ກ່ຽວຂ້ອງກັບທຸລະກຳກັບພາກສ່ວນກ່ຽວຂ້ອງ ລວມທັງຄວາມຄຶບຖ້ອນ ແລະ ການເປີດເຜີຍທີ່ເໝາະສົມ. • ມີການໃຊ້ດຸນພິນິດທີ່ມີສາລະສຳຄັນໃນການກຳນົດວິທີການບັນຊີທີ່ເໝາະສົມ ລວມທັງເວລາການຍົກເລີກການຮັບຮູ້ຂອງການດຳເນີນງານ Plus Card ແລະ ການປະເມີນມູນຄ່າຂອງຊັບສິນທີ່ເຫຼືອ (ອຸປະກອນ ແລະ ຊອບແວ)	ພວກເຮົາປະຕິບັດຕາມຂັ້ນຕອນການກວດສອບດັ່ງຕໍ່ໄປນີ້: **ທຳຄວາມເຂົ້າໃຈທຸລະກຳ** ພວກເຮົາໄດ້ຮັບ ແລະ ທົບທວນຂໍ້ຕົກລົງ ແລະ ຂໍ້ຕົກລົງທີ່ແກ້ໄຂ ລະຫວ່າງບໍລິສັດ, ຄອບຄົວສິດທິໄຊ ແລະ FINA ເພື່ອເຂົ້າໃຈເງື່ອນໄຂ ແລະ ຂໍ້ກຳນົດຕ່າງໆ ລວມທັງວັນທີມີຜົນບັງຄັບໃຊ້ ແລະ ເງື່ອນໄຂການຊຳລະ. **ປະເມີນການບັນຊີທີ່ນຳໃຊ້** ພວກເຮົາໄດ້ປະເມີນການວິເຄາະຂອງຜູ້ບໍລິຫານກ່ຽວກັບວິທີການບັນຊີທີ່ເໝາະສົມ ລວມທັງເວລາການຮັບຮູ້ ແລະ ການຍົກເລີກການຮັບຮູ້ຂອງການດຳເນີນງານ Plus Card ໂດຍອ້າງອີງຕາມນະໂຍບາຍການບັນຊີທີ່ນຳໃຊ້. **ກວດຢືນຢັນຍອດຊັບສິນສຸດທິ** ພວກເຮົາໄດ້ທົດສອບອີງປະກອບພື້ນຖານຂອງຊັບສິນສຸດທິ ຂອງໜ່ວຍງານ Plus Card ນະທີ 31 ທັນວາ 2024 ລວມທັງ ຊັບສົມບັດຄົງທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ ແລະ ປຽບທຽບກັບຂໍ້ຕົກລົງການຊຳລະ. **ປະເມີນຈຳນວນການຊຳລະ** ພວກເຮົາໄດ້ປະເມີນວ່າມູນຄ່າສຸດທິ ຂອງຊັບສິນ (2.2 ພັນລ້ານກີບ) ທີ່ໃຊ້ເພື່ອຫັກລົບກັບໜີ້ສິນຕໍ່ຄອບຄົວສິດທິໄຊ ມີຄວາມສອດຄ່ອງກັບບັນທຶກການບັນຊີແລະເອກະສານປະກອບສະໜັບສະໜູນ. **ພິຈາລະນາຄວາມກ່ຽວຂ້ອງກັບພາກສ່ວນກ່ຽວຂ້ອງ** ພວກເຮົາໄດ້ປະເມີນວ່າທຸລະກຳນີ້ໄດ້ຖືກລະບຸຢ່າງເໝາະສົມວ່າເປັນທຸລະກຳກັບພາກສ່ວນກ່ຽວຂ້ອງໃນເອກະສານລາຍງານການເງິນ. ຈາກຂັ້ນຕອນທີ່ໄດ້ດຳເນີນໄປ ພວກເຮົາພົບວ່າການບັນຊີທີ່ນຳໃຊ້ໂດຍຜູ້ບໍລິຫານ ແລະ ການເປີດເຜີຍທີ່ກ່ຽວຂ້ອງກັບການໂອນຊັບສິນສຸດຄົງຂອງ Plus Card ແລະ ການຊຳລະກັບຝ່າຍກ່ຽວພັນ ໄດ້ຖືກຮັບຮູ້ຢ່າງເໝາະສົມຕາມນະໂຍບາຍການບັນຊີຂອງບໍລິສັດ

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

pwc

ຂໍ້ມູນອື່ນໆ

ຜູ້ອຳນວຍການມີຄວາມຮັບຜິດຊອບຕໍ່ຂໍ້ມູນອື່ນເຊິ່ງປະກອບມີ ຂໍ້ມູນລວມຢູ່ໃນບົດລາຍງານປະຈຳປີ ແຕ່ບໍ່ລວມເຖິງເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບທີ່ຢູ່ໃນບົດລາຍງານນັ້ນ.

ຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນ ບໍ່ຄອບຄຸມເຖິງຂໍ້ມູນອື່ນ ແລະ ພວກເຮົາບໍ່ໄດ້ໃຫ້ຄວາມເຊື່ອໝັ້ນຕໍ່ຂໍ້ມູນເຫຼົ່ານັ້ນ.

ເພື່ອໃຫ້ສອດຄ່ອງກັບການກວດສອບ ຂອງພວກເຮົາຕໍ່ກັບເອກະສານລາຍງານການເງິນ, ຄວາມຮັບຜິດຊອບຂອງພວກເຮົາ ຄືການອ່ານ ແລະ ພິຈາລະນາວ່າຂໍ້ມູນອື່ນມີຄວາມຂັດແຍ່ງທີ່ເປັນສາລະສຳຄັນ ກັບເອກະສານລາຍງານການເງິນລວມກິດຈະການ ຫຼື ກັບຄວາມຮູ້ທີ່ໄດ້ຮັບຈາກການກວດສອບຂອງພວກເຮົາ ຫຼື ເຫັນວ່າຂໍ້ມູນອື່ນມີການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນ ຫຼື ບໍ່. ຫາກໃນການປະຕິບັດງານດັ່ງກ່າວ ພວກເຮົາສະຫຼຸບໄດ້ວ່າຂໍ້ມູນອື່ນມີການສະແດງຂໍ້ມູນທີ່ຜິດຕໍ່ຄວາມເປັນຈິງ ພວກເຮົາຕ້ອງໄດ້ລາຍງານຕາມຄວາມເປັນຈິງ ຢ່າງໃດກໍຕາມ, ພວກເຮົາບໍ່ພົບວ່າມີເລື່ອງດັ່ງກ່າວທີ່ຕ້ອງລາຍງານ.

ຄວາມຮັບຜິດຊອບຂອງຜູ້ອຳນວຍການ ຕໍ່ເອກະສານລາຍງານການເງິນ

ຜູ້ອຳນວຍການມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນໂດຍສອດຄ່ອງກັບ ນະໂຍບາຍການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນນີ້ ແລະ ການຄວບຄຸມພາຍໃນ ເຊິ່ງຜູ້ອຳນວຍການໄດ້ກຳນົດໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນ ທີ່ປາສະຈາກການລາຍງານບໍ່ຖືກຕ້ອງ ອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ອຳນວຍການມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດ ຂອງບໍລິສັດ ໃນການດຳເນີນງານຢ່າງຕໍ່ເນື່ອງ, ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງ. ຍົກເວັ້ນ ຜູ້ອຳນວຍການມີຄວາມຕັ້ງໃຈທີ່ຈະຍຸບ ກິດຈະການ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ຄະນະກຳມະການກວດສອບ ໄດ້ຊ່ວຍຜູ້ອຳນວຍການໃນເລື່ອງຄວາມຮັບຜິດຊອບ ຂອງພວກເຂົາຕໍ່ກັບຂັ້ນຕອນໃນການກະກຽມການລາຍງານການເງິນກຸ່ມບໍລິສັດ

ຄວາມຮັບຜິດຊອບຂອງ ຜູ້ກວດສອບ ຕໍ່ເອກະສານລາຍງານການເງິນ

ວັດຖຸປະສົງ ຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນ ປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ. ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ການອອກບົດລາຍງານການກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງເຊິ່ງບໍ່ໄດ້ເປັນການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ. ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ພິຈາລະນາວ່າເປັນສາລະສຳຄັນ ເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

www.pwc.com

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ. ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີຕະຫຼອດການກວດສອບ. ການດຳເນີນງານຂອງພວກເຮົາລວມມີ:

- ລະບຸ ແລະ ປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນ ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ, ວາງແຜນ ແລະ ດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫາຫຼັກຖານທີ່ພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດຢ່າງເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ, ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານ, ການຕັ້ງໃຈລະເວັ້ນທີ່ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.

- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນໃນການກວດສອບທີ່ແທດເໝາະກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບຄຸມພາຍໃນຂອງບໍລິສັດ.

- ປະເມີນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ອຳນວຍການ.

- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ອຳນວຍການໂດຍອີງຕາມ ຫຼັກຖານການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີປັດໃຈໃຫ້ເກີດຂໍ້ສົງໃສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງບໍລິສັດ ຫຼືບໍ່. ຖ້າພວກເຮົາສະຫຼຸບໄດ້ວ່າຄວາມບໍ່ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງກ່າວໄວ້ໃນບົດລາຍງານຂອງຜູ້ກວດສອບ ຂອງພວກເຮົາກັບຂໍ້ມູນທີ່ກ່ຽວຂ້ອງທີ່ໄດ້ເປີດເຜີຍໃນເອກະສານລາຍງານການເງິນ, ຫຼື ຖ້າການເປີດເຜີຍດັ່ງກ່າວບໍ່ພຽງພໍ ຄຳເຫັນຂອງພວກເຮົາຈະປ່ຽນແປງໄປ. ຂໍ້ສະຫຼຸບຂອງພວກເຮົາຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ໃນບົດລາຍງານ ຂອງພວກເຮົາ. ເຖິງຢ່າງໃດກໍຕາມ, ເຫດການ ຫຼື ສະພາບຕົວຈິງໃນອະນາຄົດອາດເປັນສາເຫດໃຫ້ ບໍລິສັດບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ພວກເຮົາໄດ້ສື່ສານກັບຄະນະກຳມະການກວດສອບກ່ຽວກັບຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້, ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກພ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງການກວດສອບຂອງພວກເຮົາ.

ພວກເຮົາໄດ້ໃຫ້ຄຳຮັບຮອງແກ່ຄະນະກຳມະການກວດສອບວ່າ ພວກເຮົາໄດ້ປະຕິບັດຕາມຂໍ້ກຳນົດຫຼັກຈັນຍາບັນກ່ຽວຂ້ອງກັບຄວາມເປັນອິດສະຫຼະ ແລະ ໄດ້ສື່ສານກັບຄະນະກຳມະການກວດສອບກ່ຽວກັບຄວາມສຳພັນທັງໝົດ ລວມເຖິງເລື່ອງອື່ນທີ່ພວກເຮົາເຊື່ອວ່າມີເຫດຜົນທີ່ອາດພິຈາລະນາເຖິງຜົນກະທົບຕໍ່ຄວາມເປັນອິດສະຫຼະຂອງພວກເຮົາ ແລະ ຫຼັກການທີ່ພວກເຮົາໃຊ້ເພື່ອປ້ອງກັນການຂາດຄວາມເປັນອິດສະຫຼະ.

www.pwc.com

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

ຈາກບັນຫາທີ່ປຶກສາກັບຄະນະກຳມະການກວດສອບ ພວກເຮົາໄດ້ພິຈາລະນາບັນຫາເຫຼົ່ານັ້ນແມ່ນບັນຫາທີ່ມີສາລະສຳຄັນທີ່ສຸດໃນການກວດສອບເອກະສານລາຍງານການເງິນຄັ້ງນີ້ ແລະ ກຳນົດເປັນເລື່ອງສຳຄັນໃນການກວດສອບ. ພວກເຮົາໄດ້ອະທິບາຍເລື່ອງເຫຼົ່ານີ້ໃນບົດລາຍງານຂອງຜູ້ກວດສອບ, ຍົກເວັ້ນກົດໝາຍ ຫຼື ຂໍ້ບັງຄັບບໍ່ໃຫ້ເປີດເຜີຍຕໍ່ສາທາລະນະກ່ຽວກັບເລື່ອງດັ່ງກ່າວ ຫຼື ໃນສະພາບການທີ່ຍາກຈະເກີດຂຶ້ນ ພວກເຮົາພິຈາລະນາວ່າບໍ່ຄວນສື່ສານເລື່ອງດັ່ງກ່າວໃນບົດລາຍງານຂອງພວກເຮົາ ເພາະການປະຕິບັດດັ່ງກ່າວສາມາດຄາດການໄດ້ຢ່າງສົມເຫດສົມຜົນວ່າຈະມີຜົນກະທົບໃນທາງລົບຫຼາຍກວ່າຜົນປະໂຫຍດ ຕໍ່ສ່ວນໄດ້ເສຍສາທາລະນະຈາກການສື່ສານດັ່ງກ່າວ.

ບໍລິສັດ ພຣາຍສ໌ວໍເຕີເຮົ້າສ໌ກຸບເປີສ໌ (ລາວ) ຈຳກັດ ຜູ້ດຽວ

ທ່ານ ພິງພັນ ດຳຣິງພັນອຸດົມ
ຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ ສປປ ລາວ
ວັນທີ: 29 ມິຖຸນາ 2026

ບໍລິສັດ ພຣາຍສ໌ວໍເຕີເຮົ້າສ໌ກຸບເປີສ໌ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕຸ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

ໃບລາຍງານຖານະການເງິນ
ໃນວັນທີ 31 ທັນວາ 2025

	ບິດ ອະທິບາຍ	2025 ກີບ	2024 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	4	1,449,305,049	14,207,853,359
ໜີ້ຕ້ອງຮັບທາງການຄ້າ,ສຸດທິ	5	7,681,707,215	24,556,564,655
ເຄື່ອງໃນສາງ,ສຸດທິ	6	392,082,604	592,124,907
ເງິນກູ້ຢືມໄລຍະສັ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງ	25.5	152,730,554,156	152,658,377,836
ຊັບສິນໝຸນວຽນອື່ນໆ	7	544,740,472,466	491,858,064,104
ລວມຊັບສິນໝຸນວຽນ		**706,994,121,490**	**683,872,984,861**
ຊັບສິນບໍ່ໝຸນວຽນ			
ຊັບສິນບັດຄຶງທີ່ມີຕົວຕົນ,ສຸດທິ	8	439,826,109,569	407,220,439,634
ຊັບສິນບັດຄຶງທີ່ບໍ່ມີຕົວຕົນ,ສຸດທິ	9	531,683,706	1,423,840,814
ຊັບສິນເພື່ອການລົງທຶນ,ສຸດທິ	10	410,588,385,114	401,172,184,257
ການລົງທຶນໃນບໍລິສັດໃນເຄືອ	11	198,000,000,000	198,000,000,000
ຊັບສິນບໍ່ໝຸນວຽນອື່ນໆ	12	75,398,114,451	70,656,333,651
ລວມຊັບສິນບໍ່ໝຸນວຽນທັງໝົດ		**1,124,344,292,840**	**1,078,472,798,356**
ລວມຊັບສິນທັງໝົດ		**1,831,338,414,330**	**1,762,345,783,217**

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ທ່ານ ຄຳສອນ ສິດທິໄຊ
ຜູ້ອຳນວຍການ

ວັນທີ: 29 ມິຖຸນາ 2026

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 29 ມິຖຸນາ 2026

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 12 ເຖິງ 33 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ໃບລາຍງານຖານະການເງິນ
ໃນວັນທີ 31 ທັນວາ 2025

	ບິດ ອະທິບາຍ	2025 ກີບ	2024 ກີບ
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງທາງການຄ້າ	13	9,190,812,474	10,586,455,218
ໜີ້ຕ້ອງສົ່ງອາກອນ	14	3,783,573,319	3,597,253,809
ເງິນກູ້ຢືມໄລຍະສັ້ນ	15	198,743,680,873	196,045,080,680
ໜີ້ສິນໝຸນວຽນອື່ນໆ	16	403,001,380,635	331,066,943,412
ລວມໜີ້ສິນໝຸນວຽນທັ້ງໝົດ		**614,719,447,301**	**541,295,733,119**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ	15	661,278,301,046	630,300,366,695
ລວມໜີ້ສິນບໍ່ໝຸນວຽນທັ້ງໝົດ		**661,278,301,046**	**630,300,366,695**
ລວມໜີ້ສິນທັ້ງໝົດ		**1,275,997,748,347**	**1,171,596,099,814**
ທຶນ			
ທຶນຈົດທະບຽນທີ່ຖອກແລ້ວ	17	470,000,000,000	470,000,000,000
ສ່ວນເພີ່ມມູນຄ່າຮຸ້ນ	17	27,638,932,340	27,638,932,340
ສ່ວນເພີ່ມຈາກການຕີມູນຄ່າ		506,179,434,116	462,988,363,512
ກຳໄລ/(ຂາດທຶນ) ສະສົມ			
ຈັດສັນ-ຄັງສະສົມຕາມລະບຽບການ	18	3,708,530,711	3,708,530,711
ຄັງສະສົມອື່ນໆ		1,977,267,979	1,977,267,979
ຂາດທຶນສະສົມລໍ້າແຍ່ງປັນ		(454,163,499,163)	(375,563,411,139)
ລວມທຶນທັ້ງໝົດ		**555,340,665,983**	**590,749,683,403**
ລວມໜີ້ສິນ ແລະ ທຶນ ທັ້ງໝົດ		**1,831,338,414,330**	**1,762,345,783,217**

ທ່ານ ຄຳສອນ ສິດທິໄຊ
ຜູ້ອຳນວຍການ

ວັນທີ: 29 ມິຖຸນາ 2026

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 29 ມິຖຸນາ 2026

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 12 ເຖິງ 33 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ໃບລາຍງານຜົນໄດ້ຮັບ
ສຳລັບທ້າຍປີສິ້ນສຸດ ວັນທີ 31 ທັນວາ 2025

	ປີດ ອະທິບາຍ	2025 ກີບ	2024 ກີບ
ລາຍຮັບ	19	-	2,298,834,391
ຕົ້ນທຶນຂາຍ		-	(86,607,381)
ກຳໄລເບື້ອງຕົ້ນ		**-**	**2,212,227,010**
ລາຍຮັບອື່ນໆ	20	19,983,864,634	112,476,447,055
ຂາດທຶນຈາກອັດຕາແລກປ່ຽນ		(6,978,275)	(6,746,817,427)
ລາຍຈ່າຍໃນການຂາຍ		(56,785,696)	(44,519,366)
ລາຍຈ່າຍບໍລິຫານ		(23,541,013,335)	(24,942,590,629)
(ຂາດທຶນ)/ກຳໄລຈາກການດຳເນີນງານ		**(3,620,912,672)**	**82,954,746,643**
ລາຍຈ່າຍທາງການເງິນ	22	(74,979,175,352)	(59,329,635,022)
(ຂາດທຶນ)/ກຳໄລກ່ອນຫັກອາກອນ		**(78,600,088,024)**	**23,625,111,621**
ອາກອນກຳໄລ	23	-	-
(ຂາດທຶນ)/ກຳໄລສຸດທິສຳລັບປີ		**(78,600,088,024)**	**23,625,111,621**
(ຂາດທຶນ)/ກຳໄລຕໍ່ຮຸ້ນ			
(ຂາດທຶນ)/ກຳໄລພື້ນຖານຕໍ່ຮຸ້ນ	24	(334)	101

ທ່ານ ຄຳສອນ ສິດທິໄຊ
ຜູ້ອຳນວຍການ

ວັນທີ: 29 ມິຖຸນາ 2026

ທ່ານ ນາງ ຈັນທະຄອມ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 29 ມິຖຸນາ 2026

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າ 12 ເຖິງ 33 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

	ທຶນຈົດທະບຽນ ທີ່ຖອກແລ້ວ (ບິດອະທິບາຍຂໍ້ທີ 17) ກີບ	ສ່ວນເພີ່ມມູນຄ່າຮຸ້ນ (ບິດອະທິບາຍຂໍ້ທີ 17) ກີບ	ສ່ວນເພີ່ມຈາກການຕີມູນຄ່າ ກີບ	ກຳໄລ/(ຂາດທຶນ)ສະສົມ ຄ້າງສະສົມຕາມລະບຽບການ (ບິດອະທິບາຍຂໍ້ທີ 18) ກີບ	ຄ້າງສະສົມອື່ນໆ ກີບ	ຂາດທຶນສະສົມ ລໍ້ຖ້າແບ່ງປັນ ກີບ	ລວມ ກີບ
ຍອດໃນວັນທີ 1 ມັງກອນ 2024	470,000,000,000	27,638,932,340	313,029,203,069	3,708,530,711	1,977,267,979	(399,188,522,760)	417,165,411,339
ສ່ວນເພີ່ມຈາກການຕີມູນຄ່າ			149,959,160,443	-	-	-	149,959,160,443
ກຳໄລສຸດທິສຳລັບປີ	-	-	-	-	-	23,625,111,621	23,625,111,621
ຍອດໃນວັນທີ 31 ທັນວາ 2024	**470,000,000,000**	**27,638,932,340**	**462,988,363,512**	**3,708,530,711**	**1,977,267,979**	**(375,563,411,139)**	**590,749,683,403**
ຍອດໃນວັນທີ 1 ມັງກອນ 2025	470,000,000,000	27,638,932,340	462,988,363,512	3,708,530,711	1,977,267,979	(375,563,411,139)	590,749,683,403
ສ່ວນເພີ່ມຈາກການຕີມູນຄ່າ (ບິດອະທິບາຍ 8, 10)			43,191,070,604				43,191,070,604
ກຳໄລສຸດທິສຳລັບປີ						(78,600,088,024)	(78,600,088,024)
ຍອດໃນວັນທີ 31 ທັນວາ 2025	**470,000,000,000**	**27,638,932,340**	**506,179,434,116**	**3,708,530,711**	**1,977,267,979**	**(454,163,499,163)**	**555,340,665,983**

ທ່ານ ຄຳສອນ ສິດທິໄຊ
ຜູ້ອຳນວຍການ

ວັນທີ: 29 ມິຖຸນາ 2026

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 29 ມິຖຸນາ 2026

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 12 ເຖິງ 33 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບທ້າຍປີສິ້ນສຸດ ວັນທີ 31 ທັນວາ 2025

	ບິດ ອະທິບາຍ	2025 ກີບ	2024 ກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ:			
ກຳໄລ/(ຂາດທຶນ)ກ່ອນຫັກອາກອນກຳໄລສຳລັບປີ		(78,600,088,024)	23,625,111,621
ປັບປຸງເພື່ອສົມທຽບກຳໄລສຸດທິກັບເງິນສົດສຸດທິ			
ຄ່າຫຼ້ຍຫ້ຽນ ແລະ ຄ່າເຊື່ອມມູນຄ່າ	21	2,325,359,069	5,149,941,790
ຫັກເພີ່ມ/(ເກັບຄືນ)ສຳຮອງໜີ້ຕ້ອງຮັບທວງຍາກ		-	509,940,496
ກຳໄລຈາກມູນຄ່ຍຸດຕິທຳຂອງຊັບສິນເພື່ອການລົງທຶນ	20	-	(94,222,979,707)
ລາຍຮັບດອກເບ້ຍ	20	(2,961,430,768)	(2,034,177,370)
ລາຍຈ່າຍດອກເບ້ຍ		74,979,175,352	59,329,635,022
ການປ່ຽນແປງໃນການດຳເນີນງານ:			
ໜີ້ຕ້ອງຮັບທາງການຄ້າ		16,874,857,440	(890,194,593)
ເຄື່ອງໃນສາງ		200,042,303	208,855,625
ໜີ້ຕ້ອງສົ່ງທາງການຄ້າ		(1,395,642,744)	3,505,950,623
ໜີ້ຕ້ອງສົ່ງອາກອນ		186,319,510	(3,427,850,052)
ຊັບສິນບ່ໝຸນວຽນອື່ນໆ		(7,816,909,612)	(5,254,471,897)
ຊັບສິນໝຸນວຽນອື່ນໆ		(4,741,780,800)	8,567,637,276
ໜີ້ສິນໝຸນວຽນອື່ນໆ		59,430,833,629	67,155,582,292
ເງິນສົດທີ່ເກີດຂຶ້ນຈາກການດຳເນີນງານ		**58,480,735,355**	**62,222,981,126**
ດອກເບ້ຍທີ່ໄດ້ຮັບ		-	-
ດອກເບ້ຍທີ່ໄດ້ຈ່າຍ		(62,625,526,516)	(45,595,849,219)
ເງິນສົດສຸດທິ(ທີ່ໃຊ້ໃນ)/ຮັບຈາກກິດຈະກຳການ ດຳເນີນງານ		**(4,144,791,161)**	**16,627,131,907**
ກະແສເງິນສົດຈາກກິດຈະກຳການລົງທຶນ:			
ການໄດ້ມາຂອງຊັບສິນບັດຖຶງທີ່ມີຕົວຕົນ ແລະ ຊັບສິນບັດຖຶງທີ່ບ່ມີຕົວຕົນ	8, 9	(264,037,149)	(2,301,836,850)
ຈ່າຍລ່ວງໜ້າສຳລັບການລົງທຶນ	12	-	(20,097,842,997)
ເງິນສົດສຸດທິທີ່ໃຊ້ໃນກິດຈະກຳການລົງທຶນ		**(264,037,149)**	**(22,399,679,847)**

ທ່ານ ຄຳສອນ ສິດທິໄຊ
ຜູ້ອຳນວຍການ

ວັນທີ: 29 ມິຖຸນາ 2026

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 29 ມິຖຸນາ 2026

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 12 ເຖິງ 33 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບທ້າຍປີສິ້ນສຸດ ວັນທີ 31 ທັນວາ 2025

	ບິດ ອະທິບາຍ	2025 ກີບ	2024 ກີບ
ກະແສເງິນສົດຈາກ ກິດຈະກຳການເງິນ:			
ເງິນກູ້ຢືມທີ່ໄດ້ຮັບ	15	-	477,406,261,710
ເງິນກູ້ຢືມທີ່ໄດ້ຊຳລະ	15	(8,349,720,000)	(462,333,309,732)
ເງິນສົດສຸດທິທີ່ເກີດຂຶ້ນຈາກ/(ໃຊ້ໃນ) ກິດຈະກຳການເງິນ		**(8,349,720,000)**	**15,072,951,978**
(ຫຼຸດລົງ)/(ເພີ່ມຂຶ້ນສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		(12,758,548,310)	9,300,404,038
ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນປີ	4	14,207,853,359	4,812,188,424
ກຳໄລຈາກອັດຕາແລກປ່ຽນໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		-	95,260,897
ເງິນສົດ ແລະ ລາຍການທຽບເທົ່າເງິນສົດສຳລັບທ້າຍປີ	**4**	**1,449,305,049**	**14,207,853,359**

ທ່ານ ຄຳສອນ ສິດທິໄຊ
ຜູ້ອຳນວຍການ

ວັນທີ: 29 ມິຖຸນາ 2026

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 29 ມິຖຸນາ 2026

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 12 ເຖິງ 33 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

1. ຂໍ້ມູນທົ່ວໄປ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ບໍລິສັດ) ເປັນ ບໍລິສັດ ຈົດທະບຽນ ໃນຕະຫຼາດຫຼັກຊັບລາວ ແລະ ສ້າງຕັ້ງຂຶ້ນໃນ ສປປ ລາວ, ແມ່ນບໍລິສັດໄດ້ດຳເນີນທຸລະກິດ ແລະ ໄດ້ຈົດທະບຽນກັບ ກະຊວງອຸດສາຫະກຳ ແລະ ການຄ້າ, ລົງວັນທີ 3 ຕຸລາ 2008.

ສຳນັກງານໃຫຍ່ຂອງ ບໍລິສັດ ຕັ້ງຢູ່ ຖະໜົນກຳແພງເມືອງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ບໍລິສັດ ໄດ້ຖືຮຸ້ນ 99% ໃນ ບໍລິສັດ ປິໂຕຣເທຣດ ນຳເຂົ້າ-ສົ່ງອອກ ຈຳກັດ ແລະ ບໍລິສັດ ປິໂຕຣເທຣດ ດີສທະບິວຊັ່ນ ຈຳກັດ ຕາມລຳດັບ.

ກິດຈະກຳຫຼັກຂອງ ບໍລິສັດ ແມ່ນເປັນບໍລິສັດຖືຮຸ້ນ ແລະ ໃຫ້ບໍລິການບັດເຕີມນ້ຳມັນ (Plus Card).

ເອກະສານລາຍການເງິນ ສະບັບນີ້ ໄດ້ຮັບການເຊັນອະນຸມັດ ໂດຍສະພາຜູ້ອຳນວຍການໃນວັນທີ 29 ມິຖຸນາ 2026.

2. ນະໂຍບາຍການບັນຊີ

ນະໂຍບາຍການບັນຊີ ໄດ້ຖືກຮັບຮອງນຳໃຊ້ເຂົ້າໃນການສ້າງເອກະສານລາຍງານການເງິນ ໄດ້ກຳນົດໄວ້ ດັ່ງລຸ່ມນີ້:

2.1 ພື້ນຖານໃນການກະກຽມບົດລາຍງານ

ເອກະສານລາຍງານການເງິນ ໄດ້ຖືກສ້າງຂຶ້ນ ພາຍໃຕ້ມູນຄ່າເດີມ ແລະ ສອດຄ່ອງກັບນະໂຍບາຍການບັນຊີ ຂອງບໍລິສັດ ດັ່ງທີ່ໄດ້ອະທິບາຍໄວ້ຂ້າງລຸ່ມ ຂອງເອກະສານລາຍງານການເງິນ ສະບັບນີ້ ແລະ ໄດ້ສ້າງຂຶ້ນໂດຍໃຊ້ເກນລາຄາຕົ້ນທຶນເດີມໃນການວັດມູນຄ່າຂອງອົງປະກອບຂອງເອກະສານລາຍງານການເງິນ.

ອີງຕາມກົດໝາຍບັນຊີສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດ ທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIEs) ຕ້ອງປະຕິບັດມາດຕະຖານການລາຍງານການເງິນສາກົນ (IFRS), ເຖິງຢ່າງໃດກໍ່ຕາມ, ກະຊວງການເງິນໄດ້ອອກແຈ້ງການສະບັບເລກທີ 1137/ກງ ລົງວັນທີ 27 ເມສາ 2020 ແລະ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ລົງວັນທີ 25 ພຶດສະພາ 2020, ຊຶ່ງໃຫ້ທາງເລືອກສຳລັບ PIEs ໃນການຈັດການເຮັດແຜນປະຕິບັດການ ສຳລັບການນຳ IFRS ເຖິງວັນທີ 31 ທັນວາ 2025, ດັ່ງນັ້ນ ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບຕ້ອງປະຕິບັດ IFRS ຢ່າງເຕັມຮູບແບບໃນວັນທີ 1 ມັງກອນ 2026 ເປັນຕົ້ນໄປ.

ໃນຂະນະນີ້ຜູ້ບໍລິຫານກຳລັງກະກຽມແຜນປະຕິບັດການ ສຳລັບການດຳເນີນການຕາມ IFRS ຕາມແຈ້ງການ. ດັ່ງນັ້ນ, ຫຼັກການບັນຊີທີ່ນຳໃຊ້ອາດຈະແຕກຕ່າງຈາກ IFRS.

ການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຝ່າຍບໍລິຫານ ຕ້ອງມີການຄາດຄະເນ ແລະ ກຳນົດຂໍ້ສົມມຸດຖານຫຼາຍປະການ ເພື່ອສະແດງໃຫ້ເຫັນຈຳນວນເງິນຂອງຊັບສິນ ແລະ ໜີ້ສິນ. ການເປີດເຜີຍຂໍ້ມູນ ຊັບສິນ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນໃນມື້ກະກຽມເອກະສານລາຍງານການເງິນ ແລະ ຈຳນວນເງິນ ລາຍຮັບ ແລະ ລາຍຈ່າຍ ໃນຮອບເວລາລາຍງານ. ສະນັ້ນ, ຕົວເລກຄາດຄະເນປະຕິບັດດັ່ງກ່າວ ຕ້ອງສ້າງຂຶ້ນບົນພື້ນຖານຄວາມຮັບຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານ ກ່ຽວກັບເຫດການ ແລະ ພາກປະຕິບັດຕົວຈິງໃນປັດຈຸບັນ ເຊິ່ງສາລະສຳຄັນຂອງການຄາດຄະເນນັ້ນ ອາດຈະແຕກຕ່າງຈາກການຄາດຄະເນໃນເບື້ອງຕົ້ນຢ່າງເປັນສາລະສຳຄັນ.

ບໍລິສັດເປີດເຜີຍ ເອກະສານລາຍການເງິນແຍກກິດຈະການ ສຳລັບປີສິ້ນສຸດວັນທີ 31 ທັນວາ 2025 ແລະ 2024, ການລາຍງານ ແລະ ການເປີດເຜີຍນີ້ແມ່ນເປັນໄປຕາມກົດລະບຽບສະບັບເລກທີ 007/ຄຄຊ, ລົງວັນທີ 3 ເມສາ 2014 ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

2. ນະໂຍບາຍການບັນຊີ (ຕໍ່)

2.2 ເງິນລົງທຶນໃນບໍລິສັດໃນລຸ່ມ

ບໍລິສັດໃນເຄືອ ແມ່ນທຸກກິດຈະການ ທີ່ບໍລິສັດ (ລວມເຖິງຫ້ອໜ່ວຍດຳເນີນງານ) ມີສິດອຳນາດໃນການຄວບຄຸມ ກິດຈະການ.

ກຸ່ມບໍລິສັດມີອຳນາດຄວບຄຸມກິດຈະການເມື່ອ ກຸ່ມບໍລິສັດມີຄວາມສ່ຽງຕໍ່ ຫຼື ມີສິດໃນຜົນຕອບທີ່ປ່ຽນແປງຈາກການມີ ສ່ວນຮ່ວມກັບກິດຈະການນັ້ນ ແລະ ມີຄວາມສາມາດໃນການສົ່ງຕໍ່ຜົນຕອບແທນເຫຼົ່ານັ້ນຜ່ານອຳນາດໃນການຄວບຄຸມ ກິດຈະການນັ້ນ. ຂໍ້ມູນທາງການເງິນຂອງບໍລິສັດໃນເຄືອໄດ້ຖືກນຳມາລວມກິດຈະການເຕັມຮູບແບບຕັ້ງແຕ່ວັນທີ ກຸ່ມ ບໍລິສັດມີອຳນາດໃນການຄວບຄຸມບໍລິສັດໃນເຄືອຈົນເຖິງວັນທີ່ບໍລິສັດ ສູນເສຍອຳນາດການຄວບຄຸມໃນບໍລິສັດໃນເຄືອນັ້ນ.

ໃນເອກະສານລາຍການເງິນ, ເງິນລົງທຶນໃນບໍລິສັດໃນເຄືອ ບັນທຶກບັນຊີໂດຍຖືປະຕິບັດຕາມລາຄາຕົ້ນທຶນ.

2.3 ການຕີມູນຄ່າເງິນຕາຕ່າງປະເທດ

ບັນດາລາຍການທີ່ສະແດງໃນແຕ່ລະລາຍການຂອງ ເອກະສານລາຍງານການເງິນໄດ້ຖືກນຳສະເໜີດ້ວຍສະກຸນເງິນກີບ.

ລາຍການທີ່ເປັນສະກຸນເງິນຕາຕ່າງປະເທດໄດ້ຖືກຕີມູນຄ່າເປັນສະກຸນເງິນກີບ ດ້ວຍການນຳໃຊ້ອັດຕາແລກປ່ຽນໃນມື້ ລາຍການດັ່ງກ່າວເກີດຂຶ້ນ.

ຊັບສິນ ແລະ ໜີ້ສິນ ທີ່ສາມາດປ່ຽນເປັນເງິນ ເຊິ່ງເປັນສະກຸນເງິນຕາຕ່າງປະເທດ ທີ່ຍັງເຫຼືອໃນທ້າຍປີ ໄດ້ຖືກຕີມູນຄ່າເປັນ ສະກຸນເງິນກີບໂດຍນຳໃຊ້ອັດຕາແລກປ່ຽນໃນທ້າຍປີ. ຜົນຕ່າງກຳໄລ ແລະ ຂາດທຶນ ທັງໝົດຈາກການແປງຄ່າທີ່ຍັງບໍ່ເກີດ ຈິງ ແມ່ນຖືກຮັບຮູ້ໃນໃບລາຍງານຖານະການເງິນ ແລະ ຈະຖືກດັດປັບລາຍການ ໃນປີຕໍ່ໄປ.

ກຳໄລ ຫຼື ຂາດທຶນ ຈາກອັດຕາແລກປ່ຽນທີ່ເກີດຈິງຈະຖືກຮັບຮູ້ເຂົ້າໃນໃບລາຍງານຜົນໄດ້ຮັບ ເມື່ອມີການຊຳລະ.

ອັດຕາແລກປ່ຽນທີ່ໃຊ້ແມ່ນມາຈາກທະນາຄານທີ່ມີຊື່ສຽງໃນທ້ອງຖິ່ນ ຂອງ ສປປ ລາວ.

2.4 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ປະກອບດ້ວຍ: ເງິນສົດຢູ່ໃນມື, ເງິນຝາກ ຢູ່ໃນທະນາຄານ ຫຼື ສະຖາບັນການ ເງິນອື່ນໆ ໄລຍະສັ້ນ ມີສະພາບຄ່ອງໃນການລົງທຶນສູງ ໃນໄລຍະເວລາສາມເດືອນ ຫຼື ໜ້ອຍກ່ວາ.

2.5 ໜີ້ຕ້ອງຮັບທາງການຄ້າ

ໜີ້ຕ້ອງຮັບທາງການຄ້າ ຮັບຮູ້ຕາມມູນຄ່າໃບເກັບເງິນຕົ້ນສະບັບ ແລະ ຕີມູນຄ່າຄືນໃໝ່ໂດຍໃຊ້ມູນຄ່າຍັງເຫຼືອຫັກ ສຳຮອງ ໜີ້ຕ້ອງຮັບທວງຍາກຕາມມູນຄ່າເຫຼືອ ຕາມບັນຊີທ້າຍປີ. ສຳຮອງໜີ້ຕ້ອງຮັບທວງຍາກ ແມ່ນສ່ວນຜິດດ່ຽງລະຫວ່າງ ມູນຄ່າ ຍັງເຫຼືອໃນບັນຊີຂອງ ໜີ້ຕ້ອງຮັບ ແລະ ຈຳນວນເງິນທີ່ຄາດວ່າຈະເກັບກູ້ຄືນໄດ້. ສຳລັບໜີ້ສູນຈະໄດ້ສະສາງອອກ ຈາກ ບັນຊີໃນປີ ແລະ ຮັບຮູ້ເຂົ້າໃນໃບລາຍງານຜົນໄດ້ຮັບ ໃນສ່ວນຂອງລາຍຈ່າຍບໍລິຫານ.

ນະໂຍບາຍການຕັ້ງສຳຮອງໜີ້ທວງຍາກສຳລັບໜີ້ຕ້ອງຮັບຈາກບໍລິສັດອື່ນມີດັ່ງລຸ່ມນີ້:

ຈາກ 6 ເດືອນ ເຖິງ 1 ປີ	30%
ຈາກ 1 ປີ ເຖິງ 2 ປີ	50%
2 ປີຂຶ້ນໄປ	100%

2. ນະໂຍບາຍການບັນຊີ (ຕໍ່)

2.5 ໜີ້ຕ້ອງຮັບທາງການຄ້າ (ຕໍ່)

ບໍລິສັດ ບໍ່ມີນະໂຍບາຍການຕັ້ງສຳຮອງໜີ້ຫວງຍາກສຳລັບ ບໍລິສັດ ທີ່ກ່ຽວຂ້ອງ ເຊິ່ງລວມເຖິງເງິນໃຫ້ກູ້ຢືມ, ໜີ້ຕ້ອງຮັບ ແລະ ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆຈາກພາກສ່ວນທີ່ກ່ຽວຂ້ອງ.

ການຕັ້ງສຳຮອງໜີ້ຫວງຍາກສຳລັບໜີ້ຕ້ອງຮັບສຳລັບບໍລິສັດ ຫຼື ໃຫ້ບໍລິການໃຫ້ແກ່ໂຄງການຂອງລັດຖະບານຈະຖືກຕັ້ງໄວ້ 5% ຕໍ່ປີສຳລັບຍອດຄ້າງຈ່າຍທີ່ເກີນ 2 ປີຂຶ້ນໄປ

2.6 ເຄື່ອງໃນສາງ

ເຄື່ອງໃນສາງ ໄດ້ຖືກສະແດງ ໃນລາຄາຕົ້ນທຶນ ຫຼື ໃນມູນຄ່າຂາຍອອກໄດ້ສຸດທິທີ່ຕ່ຳກວ່າ, ເຊິ່ງຕົ້ນທຶນຂອງເຄື່ອງໃນສາງ ໄດ້ຖືກກຳນົດໂດຍວິທີສະເລ່ຍ. ຕົ້ນທຶນໃນການຊື້ເຄື່ອງໃນສາງ ປະກອບດ້ວຍ ລາຄາຊື້ ແລະ ຕົ້ນທຶນຄ່າໃຊ້ຈ່າຍທາງກົງທີ່ເກີດຈາກການຊື້ເຄື່ອງໃນສາງ ເຊັ່ນ: ພາສີນຳເຂົ້າ ແລະ ຄ່າໃຊ້ຈ່າຍການຂົນສົ່ງ, ຫັກບັນດາສ່ວນຫຼຸດ, ເງິນແຮ ຫຼື ການສົ່ງຄືນ. ຕົ້ນທຶນຂອງສິນຄ້າສຳເລັດຮູບ ປະກອບດ້ວຍ: ຕົ້ນທຶນການອອກແບບ, ວັດຖຸດິບ, ຄ່າແຮງງານທາງກົງອື່ນໆ ແລະ ສ່ວນເກີນການຜະລິດທີ່ກ່ຽວຂ້ອງກັບກຳລັງການຜະລິດ, ບໍ່ລວມຕົ້ນທຶນການກູ້ຢືມ. ມູນຄ່າສຸດທິ ທີ່ຈະໄດ້ຮັບ ໝາຍເຖິງການປະເມີນລາຄາຂາຍ ໃນຊ່ວງເວລາປົກກະຕິຂອງການດຳເນີນທຸລະກິດ, ລົບໃຫ້ຕົ້ນທຶນລວມ ແລະ ຄ່າໃຊ້ຈ່າຍໃນການຂາຍເຄື່ອງໃນສາງ. ສ່ວນຫຼຸດມູນຄ່າອາດຈະເກີດຂຶ້ນໄດ້ໃນກໍລະນີທີ່ມີເຫດການສະເພາະ ເຊັ່ນ: ເມື່ອສິນຄ້າໃນສາງພົ້ນສະໄໝ, ຮອບວຽນຂາຍຊ້ຳ ແລະ ສິນຄ້າເສຍຫາຍ.

2.7 ຊັບສິນເພື່ອການລົງທຶນ

ຊັບສິນທີ່ຖືຄອງໂດຍບໍລິສັດ ເພື່ອຫາປະໂຫຍດຈາກລາຍຮັບຄ່າເຊົ່າ ຫຼື ຈາກການເພີ່ມຂຶ້ນຂອງມູນຄ່າຂອງຊັບສິນ ຫຼື ທັ້ງສອງຢ່າງ ແລະ ບໍ່ໄດ້ມີໄວ້ໃນງານໂດຍກົດຈະການໃນບໍລິສັດ ຈະຖືກຈັດປະເພດເປັນ ຊັບສິນເພື່ອການລົງທຶນ ລວມເຖິງຊັບສິນທີ່ຢູ່ລະຫວ່າງກໍ່ສ້າງ ຫຼື ພັດທະນາ ເພື່ອເປັນຊັບສິນ ເພື່ອການລົງທຶນໃນອະນາຄົດ.

ທີ່ດິນຈະຖືກບັນທຶກເປັນຊັບສິນ ເພື່ອການລົງທຶນຂອງບໍລິສັດ ຊັບສິນດັ່ງກ່າວ ຖືກນຳໃຊ້ເຂົ້າໃນການລົງທຶນໄປແລ້ວ.

ຊັບສິນເພື່ອການລົງທຶນ ຈະບັນທຶກເບື້ອງຕົ້ນໂດຍລາຄາທຶນໂດຍລວມຕົ້ນທຶນທີ່ກ່ຽວຂ້ອງສຳລັບການໄດ້ມາຂອງຊັບສິນເພື່ອການລົງທຶນ. ຍົກເວັ້ນທີ່ດິນ, ທີ່ດິນທີ່ຖືກຈັດປະເພດເປັນຊັບສິນເພື່ອການລົງທຶນ ແມ່ນຖືກຮັບຮູ້ໂດຍໃຊ້ວິທີການປະເມີນມູນຄ່າຄືນໃຫມ່ (ປົດອະທິບາຍ ຂໍ້ທີ 2.8).

ຊັບສິນເພື່ອການລົງທຶນປະເພດ "ອາຄານ" ຈະຖືກຈັດດ້ວຍມູນຄ່າຍຸດຕິທຳ. ຈາກນັ້ນ, ກໍຈະຖືກຮັບຮູ້ດ້ວຍມູນຄ່າຍຸດຕິທຳ. ສ່ວນຕ່າງໃນມູນຄ່າຍຸດຕິທຳຈະຖືກບັນທຶກໄວ້ໃນກຳໄລ ຫຼື ຂາດທຶນ. ມູນຄ່າຍຸດຕິທຳ ຈະຖືກກຳນົດເປັນປະຈຳທຸກປີ ອີງຕາມການປະເມີນຂອງຜູ້ປະເມີນອິດສະຫຼະພາຍນອກ

2. ນະໂຍບາຍການບັນຊີ (ຕໍ່)

2.8 ຊັບສິນຄົງທີ່ມີຕົວຕົນ

ລາຍການຂອງຊັບສິນຄົງທີ່ມີຕົວຕົນທັງໝົດຍົກເວັ້ນທີ່ດິນ* ໄດ້ຖືກບັນທຶກບັນຊີຕາມມູນຄ່າຕົ້ນທຶນເດີມ ຫັກຄ່າຫຼ້ຍຫ້ຽນສະສົມ, ມູນຄ່າຕົ້ນທຶນເດີມ ແມ່ນລວມມີລາຍຈ່າຍທີ່ກ່ຽວຂ້ອງໂດຍກົງ ຂອງຊັບສິນນັ້ນ.

*ທີ່ດິນຈະຖືກຮັບຮູ້ໃນວິທີການປະເມີນມູນຄ່າຄືນໃຫມ່ໂດຍອີງໃສ່ໄລຍະເວລາ, ແຕ່ຢ່າງຫນ້ອຍ 2 ປີ, ການປະເມີນມູນຄ່າ ແມ່ນຕ້ອງໂດຍຜູ້ປະເມີນອິດສະຫຼະພາຍນອກ. ການເພີ່ມຂຶ້ນ/ຫຼຸດລົງຂອງມູນຄ່າຕາມບັນຊີທີ່ເກີດຈາກການປະເມີນມູນຄ່າທີ່ດິນຄືນໃໝ່ແມ່ນຖືກບັນທຶກໃນ "ສ່ວນເພີ່ມຈາກການຕີມູນຄ່າຊັບສິນຄືນໃຫມ່" ໃນສ່ວນຂອງຜູ້ຖືຮຸ້ນ. ຈຳນວນຊັບສິນທີ່ຖືກສະສາງຈາກສ່ວນເພີ່ມການຕີມູນຄ່າຊັບສິນຄືນໃຫມ່ ບໍລິສັດຈະບັນທຶກໄວ້ກຳໄລສະສົມໄວ້ ເມື່ອຊັບສິນທີ່ຕີມູນຄ່າຄືນນັ້ນໄດ້ຖືກຂາຍອອກໄປ.

ຕົ້ນທຶນທີ່ເກີດຂຶ້ນພາຍຫຼັງຈາກການໄດ້ມາຈະຖືກບັນທຶກລວມເປັນຕົ້ນທຶນຂອງຊັບສິນນັ້ນ ຫຼື ແຍກບັນທຶກເມື່ອມີຄວາມເປັນໄປໄດ້ວ່າຈະເກີດຜົນປະໂຫຍດດ້ານເສດຖະກິດໃນອະນາຄົດເຂົ້າສູ່ ບໍລິສັດ ແລະ ສາມາດປະມານການໄດ້ຢ່າງໜ້າເຊື່ອຖື, ຕົ້ນທຶນການສ້ອມແປງຈະຖືກບັນເປັນລາຍຈ່າຍເມື່ອເກີດຂຶ້ນ ເມື່ອມີການປ່ຽນສ່ວນປະກອບຂອງຊັບສິນ ສ່ວນປະກອບນັ້ນ ຈະຖືກລ້າງມູນຄ່າອອກຈາກບັນຊີ.

ຄ່າສ້ອມແປງ ແລະ ຄ່າບຳລຸງຮັກສາແມ່ນໄດ້ບັນທຶກເຂົ້າໃນໃບລາຍງານຜົນໄດ້ຮັບໃນລະຫວ່າງ ໄລຍະການເງິນທີ່ເກີດຂຶ້ນ, ທີ່ດິນແມ່ນບໍ່ມີຄ່າຫຼ້ຍຫ້ຽນ, ການຫັກຄ່າຫຼ້ຍຫ້ຽນຊັບສິນຄົງທີ່ມີຕົວຕົນ ຈະໃຊ້ແບບສະເລ່ຍສະໝ່ຳສະເໝີບົນພື້ນຖານ ອາຍຸການໃຊ້ງານຄາດຄະເນຂອງແຕ່ລະລາຍການຊັບສິນ ດັ່ງຕໍ່ໄປນີ້:

ອາຄານ ແລະ ການປັບປຸງອາຄານ	5 - 30 ປີ
ເຄື່ອງຈັກ ແລະ ອຸປະກອນຕ່າງໆ	2 - 10 ປີ
ພາຫະນະ	5 ປີ
ເຄື່ອງໃຊ້ສຳນັກງານ	1-10 ປີ

ກຳໄລ ແລະ ຂາດທຶນ ຈາກການຂາຍຊັບສິນຄົງທີ່ໄດ້ຖືກກຳນົດໂດຍການສົມທຽບລາຄາຂາຍ ກັບ ມູນຄ່າຕາມບັນຊີ ແລະ ຈົດເພີ່ມເຂົ້າໃນໃບລາຍງານຜົນໄດ້ຮັບຂອງບໍລິສັດ.

2.9 ຊັບສິນຄົງທີ່ບໍ່ມີຕົວຕົນ

ຊັບສິນຄົງທີ່ບໍ່ມີຕົວຕົນແມ່ນປະກອບມີ ໂປຣແກຣມຄອມພິວເຕີ, ການຊື້ລິຂະສິດໃນການນຳໃຊ້ໂປຣແກຣມຄອມພິວເຕີ ໄດ້ຈົດເປັນມູນຄ່າຊັບສິນຄົງທີ່ ບົນພື້ນຖານຄ່າໃຊ້ຈ່າຍທີ່ເກີດຂຶ້ນ ຈາກການຊື້ ແລະ ການສົ່ງ-ມອບ ຈົນກຽມພ້ອມໃຊ້ງານ, ຄ່າໃຊ້ຈ່າຍເຫຼົ່ານີ້ຖືກຫັກເປັນຄ່າໃຊ້ຈ່າຍ ຕະຫຼອດອາຍຸການໃຊ້ງານ, ເຊິ່ງບໍ່ເກີນ 2-10 ປີ, ຕົ້ນທຶນທີ່ກ່ຽວຂ້ອງກັບໂປຣແກຣມຄອມພິວເຕີສ່ວນທີ່ເຫຼືອຈະບັນທຶກເປັນລາຍຈ່າຍເມື່ອເກີດຂຶ້ນຈິງ.

2. ນະໂຍບາຍການບັນຊີ (ຕໍ່)

2.10 ເງິນກູ້ຢືມ

ເງິນກູ້ຢືມ ແມ່ນຮັບຮູ້ຕາມຈຳນວນເງິນທີ່ໄດ້ຮັບ ຕົ້ນທຶນຂອງເງິນກູ້ຢືມເຊິ່ງປະກອບມີດອກເບ້ຍຈ່າຍ ແລະ ຕົ້ນທຶນທາງກົງອື່ນໆທີ່ບໍລິສັດໄດ້ຈ່າຍໄປເພື່ອການກູ້ຢືມເງິນ. ຕົ້ນທຶນການກູ້ຢືມເງິນທີ່ນຳໃຊ້ທົ່ວໄປຈະຖືກບັນທຶກເປັນລາຍຈ່າຍໃນລະຫວ່າງປີທີ່ເກີດຂຶ້ນ.

ຕົ້ນທຶນການກູ້ຢືມເກີດຂຶ້ນ ແລະ ກ່ຽວຂ້ອງໂດຍກົງກັບການຈັດຫາ ການກໍ່ສ້າງໃນຊ່ວງໄລຍະເວລາກໍ່ສ້າງ ຈົນສ້າງແລ້ວສຳເລັດ ພ້ອມໃຊ້ງານ ຈະຖືກບັນທຶກເປັນຕົ້ນທຶນຂອງຊັບສິນນັ້ນ.

ຕົ້ນທຶນຄ່າຈັດການເງິນກູ້ຢືມ ຈະບັນທຶກເປັນລາຍຈ່າຍລ່ວງໜ້າ ແລະ ຕັດຈ່າຍເຂົ້າໃນໃນລາຍງານຜົນໄດ້ຮັບຕາມອາຍຸສັນຍາການກູ້ຢືມ.

ເງິນກູ້ຢືມ ໄດ້ຖືກຈຳແນກໃຫ້ເປັນໜີ້ສິນໝຸນວຽນ ຍົກເວັ້ນໃນກໍລະນີທີ່ ບໍລິສັດ ໄດ້ຮັບສິດໃນການການຊຳລະໜີ້ ຂອງໜີ້ສິນທັງໝົດ ຢ່າງຕ່ຳເປັນເວລາ 12 ເດືອນ ພາຍຫຼັງວັນທີ ຂອງປົດລາຍງານ.

2.11 ສັນຍາເຊົ່າ

ສັນຍາເຊົ່າ ທີ່ບໍລິສັດເປັນຜູ້ເຊົ່າ

ສັນຍາເຊົ່າ ທີ່ບໍ່ໄດ້ໂອນຄວາມສ່ຽງ ແລະ ຜົນປະໂຫຍດທີ່ສຳຄັນໃຫ້ແກ່ຜູ້ເຊົ່າ ເຊິ່ງຈຳແນກສັນຍາເຊົ່າດັ່ງກ່າວ ເປັນສັນຍາເຊົ່າປົກກະຕິໃນການດຳເນີນທຸລະກິດ ລາຍຈ່າຍພາຍໃຕ້ສັນຍາເຊົ່າ (ລົບທຸກລາຍການ ທີ່ໄດ້ຮັບຈາກຜູ້ໃຫ້ເຊົ່າ) ຖືກຈັດເປັນລາຍຈ່າຍໃນໃບລາຍງານຜົນໄດ້ຮັບ ແບບສະເລ່ຍສະໜ່ຳສະເໝີຕາມອາຍຸການຂອງສັນຍາເຊົ່າ.

ເມື່ອສັນຍາເຊົ່າ ມີການຍົກເລີກສັນຍາກ່ອນໝົດອາຍຸການເຊົ່າ, ຈຳນວນເງິນຄ່າເຊົ່າ ແລະ ຄ່າໃຊ້ຈ່າຍອື່ນໆ ຈະຕົກເປັນຂອງຜູ້ໃຫ້ເຊົ່າໃນຮູບແບບການປັບໄໝ ແລະ ຮັບຮູ້ເປັນຄ່າໃຊ້ຈ່າຍໃນຮອບເວລາທີ່ມີການຍົກເລີກສັນຍາດັ່ງກ່າວ.

ສັນຍາເຊົ່າທີ່ດິນ ອາຄານ ແລະ ອຸປະກອນ ເຊິ່ງຜູ້ເຊົ່າເປັນຜູ້ຮັບຄວາມສ່ຽງ ແລະ ຜົນຕອບແທນຂອງຄວາມເປັນເຈົ້າຂອງເກືອບທັງໝົດ ໃນສາລະສຳຄັນຂອງການເປັນເຈົ້າຂອງຈະຖືກຈັດປະເພດເປັນການເຊົ່າທາງດ້ານການເງິນ. ໂດຍສັນຍາເຊົ່າດ້ານການເງິນຈະຖືກບັນທຶກເປັນຊັບສິນຕັ້ງແຕ່ເລີ່ມຕົ້ນຂອງສັນຍາເຊົ່າ ໃນມູນຄ່າທີ່ຕ່ຳກວ່າມູນຄ່າຕາມບັນຊີຂອງຊັບສິນທີ່ເຊົ່າ ຫຼື ມູນຄ່າປັດຈຸບັນຂອງຄ່າເຊົ່າ.

ຈຳນວນເງິນທີ່ຕ້ອງຈ່າຍດັ່ງກ່າວຈະປັນສ່ວນລະຫວ່າງໜີ້ສິນ ແລະ ຄ່າໃຊ້ຈ່າຍທາງການເງິນ. ເພື່ອໄດ້ຮັບອັດຕາທີ່ຄົງທີ່ຈາກຍອດຄົງຄ້າງຂອງໜີ້ສິນທີ່ຍັງບໍ່ໄດ້ຈ່າຍ. ພັນທະການເຊົ່າທີ່ກ່ຽວຂ້ອງຫຼັງຈາກຫັກຄ່າໃຊ້ຈ່າຍທາງດ້ານການເງິນຈະຖືກລວມເຂົ້າກັບເຈົ້າໜີ້ໄລຍະຍາວອື່ນໆ. ອົງປະກອບດອກເບ້ຍຂອງຕົ້ນທຶນທາງດ້ານການເງິນແມ່ນຖືກຮັບຮູ້ເປັນຄ່າໃຊ້ຈ່າຍໃນເອກະສານລາຍງານກຳໄລ - ຂາດທຶນ ໃນໄລຍະຂອງສັນຍາເຊົ່າ ໂດຍການສ້າງອັດຕາດອກເບ້ຍຄົງທີ່ໃນແຕ່ລະງວດຈາກຍອດຄົງເຫຼືອຂອງໜີ້ສິນໃນແຕ່ລະງວດ. ຊັບສິນ, ອາຄານ ຫຼື ອຸປະກອນທີ່ໄດ້ມາພາຍໃຕ້ສັນຍາເຊົ່າທາງດ້ານການເງິນແມ່ນຖືກຫັກຄ່າຫຼ້ຽຫ້ຽນໃນໄລຍະເວລາທີ່ສັ້ນກວ່າລະຫວ່າງ ອາຍຸການໃຊ້ງານຂອງຊັບສິນ ແລະ ໄລຍະເວລາຂອງສັນຍາເຊົ່າ.

ສັນຍາເຊົ່າ ທີ່ທາງບໍລິສັດເປັນຜູ້ໃຫ້ເຊົ່າ

ຊັບສິນທີ່ທາງ ບໍລິສັດໃຫ້ເຊົ່າ ພາຍໃຕ້ສັນຍາເຊົ່າໃນການດຳເນີນທຸລະກິດ ຖືກຮັບຮູ້ເປັນຊັບສິນຄົງທີ່ມີຕົວຕົນ ແລະ ຊັບສິນເພື່ອການລົງທຶນໃນໃບລາຍງານຖານະການເງິນ. ລາຍຮັບຈາກຄ່າເຊົ່າພາຍໃຕ້ສັນຍາເຊົ່າໃນການດຳເນີນທຸລະກິດ ຖືກຮັບຮູ້ແບບສະເລ່ຍສະໜ່ຳສະເໝີ ຕາມອາຍຸການຂອງສັນຍາເຊົ່າດັ່ງກ່າວ.

2. ນະໂຍບາຍການບັນຊີ (ຕໍ່)

2.12 ອາກອນກຳໄລ

ບໍລິສັດ ບັນທຶກອາກອນລາຍຮັບ ຕາມຫຼັກເກນຄ້າງຮັບຄ້າງຈ່າຍ ຕາມກົດໝາຍສ່ວຍສາອາກອນລາວ. ບໍລິສັດ ບໍ່ໄດ້ບັນທຶກ ອາກອນລາຍຮັບທີ່ຄ້າງຈ່າຍ ຫຼື ຄ້າງຮັບ ໃນອະນາຄົດ ເຊິ່ງເກີດຈາກສ່ວນຜິດຕ່າງຊົ່ວຄາວ. ລາຍຈ່າຍອາກອນແມ່ນຮັບຮູ້ບົນ ພື້ນຖານຜົນການດຳເນີນງານໃນປີຫຼັງຕັດແກ້ ທີ່ບໍ່ສາມາດຫັກລາຍຈ່າຍ ແລະ ລາຍການເຄື່ອນໄຫວອື່ນໆ ຕາມກົດໝາຍວ່າດ້ວຍ ສ່ວຍສາອາກອນ ແລະ ອັດຕາອາກອນ. ພາຍໃຕ້ລະບຽບການບັນຊີ ແລະ ກົດໝາຍສ່ວຍສາອາກອນ ລາຍຈ່າຍອາກອນໃນປີ ແມ່ນໄດ້ຄິດໄລ່ຕາມພື້ນຖານລາຍຮັບຂອງບໍລິສັດ (ບົດອະທິບາຍຂໍ້ທີ 23).

ໃນ ສປປ ລາວ ອາກອນລາຍຮັບຕ້ອງໄດ້ຮັບການກວດກາລາຍລະອຽດຄືນຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ບົນພື້ນຖານທົ່ວໄປ. ນອກຈາກນີ້, ຂໍ້ພິບເຫັນທີ່ເກີດຂຶ້ນຈາກການກວດກາຄືນດັ່ງກ່າວອາດຈະຕ້ອງມີຄຳເຫັນ ແລະ ຕີລາຄາ ໂດຍພາກສ່ວນທີ່ ກ່ຽວຂ້ອງ ເຊິ່ງອາດຈະມີຜົນກະທົບຕໍ່ບໍລິສັດ ແລະ ອາດສົ່ງຜົນໃຫ້ເກີດການຊຳລະອາກອນເພີ່ມຕື່ມ ຫຼື ຮັບຄືນ ໃນກໍລະນີຈຳ ເປັນ ແລະ ສາລະສຳຄັນ. ເຊິ່ງອາດຈະມີຜົນໃນການຈ່າຍເງິນ ຫຼື ຮັບຄືນ ຂອງການຮັບຮູ້ລາຍຈ່າຍອາກອນລາຍຮັບພາຍໃນປີທີ່ມີ ການກວດກາໄດ້ສຳເລັດ.

2.13 ທຶນຈົດທະບຽນ

ຮຸ້ນສາມັນ ແລະ ຮຸ້ນບຸລິມະສິດແບບໄຖ່ຖອນຄືນບໍ່ໄດ້ ແຕ່ມີສິດໄດ້ຮັບເງິນປັນຜົນຈະຖືກຈັດປະເພດເປັນທຶນຂອງຂາຮຸ້ນ.

ສ່ວນເພີ່ມມູນຄ່າຮຸ້ນຈະຖືກບັນທຶກເມື່ອມີການອອກຈຳໜ່າຍຮຸ້ນ ຫຼື ມີການເພີ່ມຮຸ້ນ ໂດຍສະແດງຜົນຕ່າງຂອງລາຄາທີ່ສະເໜີ ຂາຍ ແລະ ລາຄາຕົ້ນທຶນທີ່ຈົດທະບຽນໄວ້ ຫຼັງຈາກຫັກ ຕົ້ນທຶນໃນການອອກຮຸ້ນ (ເຊັ່ນ: ຄ່າທຳນຽມການຈຳໜ່າຍ ແລະ ລາຍ ຈ່າຍອື່ນໆ ທີ່ກ່ຽວກັບການກະປະເມີນມູນຄ່າ ແລະ ຄ່າທີ່ປຶກສາ).

ອີງຕາມຄູ່ມືແນະນຳການປະຕິບັດສະບັບເລກທີ 056/ຄຄຊ ອອກໂດຍ ຄຄຊ ລົງວັນທີ 28 ເມສາ 2015, ໂດຍອະນຸຍາດໃຫ້ ບໍລິສັດ ສົ່ງຄືນສ່ວນເພີ່ມມູນຄ່າຮຸ້ນທີ່ເກີດຈາກການເຂົ້າຕະຫຼາດຄັ້ງທຳອິດ ຈຳນວນ 75% ຫຼັງຈາກໄດ້ຫັກຕົ້ນທຶນການ ອອກຮຸ້ນແລ້ວ, ໃຫ້ແກ່ຜູ້ຖືຮຸ້ນທີ່ເປັນຜູ້ສ້າງຕັ້ງ ບໍລິສັດ.

2.14 ການຮັບຮູ້ລາຍຮັບ

ລາຍຮັບໃນໃບເກັບເງິນຈາກການຂາຍສິນຄ້າສຸດທິຫຼັງຫັກສ່ວນຫຼຸດທີ່ໄດ້ຮັບ ແລະ ສ່ວນຫຼຸດຈາກການສັ່ງຊື້. ລາຍຮັບຈາກການ ຂາຍສິນຄ້າຮັບຮູ້ເມື່ອຄວາມສ່ຽງ ແລະ ຜົນປະໂຫຍດທີ່ສຳຄັນເຈົ້າຂອງຄວາມເປັນເຈົ້າຂອງແມ່ນຖືກໂອນ ຫຼື ຖືກສົ່ງໃຫ້ຜູ້ຊື້.

ລາຍຮັບຈາກການໃຫ້ບໍລິການແມ່ນຖືກຮັບຮູ້ໃນຮອບບັນຊີທີ່ໃຫ້ບໍລິການ.

ລາຍຮັບທີ່ມາຈາກການໃຫ້ເຊົ່າ ໄດ້ຖືກຮັບຮູ້ ແບບສະເລ່ຍສະໝ່ຳສະເໝີຕະຫຼອດອາຍຸສັນຍາເຊົ່າ.

ລາຍຮັບອື່ນໆ ແມ່ນໄດ້ຮັບຮູ້ບົນພື້ນຖານ ດັ່ງລຸ່ມນີ້:

- ລາຍຮັບດອກເບ້ຍ ຮັບຮູ້ຕາມພື້ນຖານອັດຕາສ່ວນຂອງເວລາ ໃນສ່ວນຂອງຍອດໜີ້ຄ້າງຊຳລະ ແລະ ໃນອັດຕາ ດອກເບ້ຍ ຕາມສັນຍາຈົນເຖິງກຳນົດໄລຍະເວລາ ແລະ ລາຍຮັບດັ່ງກ່າວຈະຖືກຮັບຮູ້ເປັນລາຍຮັບຄ້າງຮັບເຂົ້າ ບໍລິສັດ.
- ລາຍຮັບອື່ນໆ ແມ່ນຮັບຮູ້ຕາມເກນຄ້າງຮັບຄ້າງຈ່າຍ.

3. ການໂອນຊັບ ຂອງ Plus Card ໃຫ້ສະຖາບັນການເງິນທີ່ຮັບເງິນຝາກ ຟິນະ (FINA)

ໃນລະຫວ່າງປີທີ່ສິ້ນສຸດວັນທີ 31 ທັນວາ 2025, ບໍລິສັດໄດ້ເຮັດຂໍ້ຕົກລົງເພື່ອຊຳລະໜີ້ສິນຕໍ່ຜູ້ຖືຫຸ້ນໃຫຍ່ຂອງບໍລິສັດ ຄື ຄອບຄົວ ສິດທິໄຊ ໂດຍການໂອນຊັບສິນສຸດທິທີ່ເຫຼືອຢູ່ຂອງໜ່ວຍງານ Plus Card. ຂໍ້ຕົກລົງເບື້ອງຕົ້ນໄດ້ກຳນົດໃຫ້ທຸລະກຳມີຜົນບັງຄັບໃຊ້ ຕັ້ງແຕ່ວັນທີ 1 ກໍລະກົດ 2025.

ຕໍ່ມາ ໃນເດືອນທັນວາ 2025, ຝ່າຍທັງສາມ (ບໍລິສັດ, ຕົວແທນຂອງຄອບຄົວສິດທິໄຊ ແລະ FINA) ໄດ້ຕົກລົງແກ້ໄຂຂໍ້ຕົກລົງ ເດີມ. ຕາມເງື່ອນໄຂໃໝ່, ການຊຳລະໜີ້ຕໍ່ຄອບຄົວສິດທິໄຊຈະອ້າງອີງເທິງຈຳນວນສຸດຄົງທ້າງບັນຊີຂອງຊັບສິນສຸດທິຂອງການດຳເນ Plus Card ໃນທີ 31 ທັນວາ 2024 ຈຳນວນ 2.2 ພັນລ້ານກີບ (ມູນຄ່າທີ່ໂອນ). ຂໍ້ຕົກລົງທີ່ແກ້ໄຂມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 1 ມັງກອນ 2025.

ລາຍລະອຽດຂອງຊັບສິນສຸດຄົງຂອງການດຳເນີນງານ Plus Card ນະທີ 31 ທັນວາ 2024 ມີດັ່ງນີ້:
ຊັບສິນສຸດທິຂອງ Plus Card
- ໜີ້ລູກຄ້າແລະໜີ້ອື່ນໆ: 14,735,505,402 LAK
- ຊັບສິມບັດຄົງທີ່ມີຕົວຕົນ (ສຸດທິ): 293,000 ກີບ (ບົດອະທິບາຍ 8)
- ຊັບສິມບັດໂຄງທີ່ບໍ່ມີຕົວຕົນ (ສຸດທິ): 35,000 ກີບ (ບົດອະທິບາຍ 9)
- ຫັກ: ໜີ້ຕ້ອງຮັບການຄ້າແລະໜີ້ອື່ນໆ: (12,518,676,221) ກີບ

ຊັບສິນສຸດທິໃນທີ 31 ທັນວາ 2024: 2.2 ພັນລ້ານກີບ

ມູນຄ່າສຸດທິຕາມບັນຊີຂອງຊັບສິນໄດ້ຖືກໂອນໄປເພື່ອຫັກລົບກັບຈຳນວນໜີ້ຄ້າງຈ່າຍຕໍ່ຄອບຄົວສິດທິໄຊ.

ເນື່ອງມາຈາກທຸລະກຳຂ້າງເທິງ, ບໍ່ມີການນຳສະເໜີຜົນການດຳເນີນງານຈາກການດຳເນີນງານ Plus Card ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025.

4. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	2025 ກີບ	2024 ກີບ
ເງິນສົດ	15,000,000	15,734,500
ເງິນຝາກໃນທະນາຄານ	1,434,305,049	14,192,118,859
	1,449,305,049	**14,207,853,359**

5. ໜີ້ຕ້ອງຮັບທາງການຄ້າ, ສຸດທິ

	2025 ກີບ	2024 ກີບ
ໜີ້ຕ້ອງຮັບທາງການຄ້າ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ທີ 25.3)	10,049,175,034	11,418,978,609
ໜີ້ຕ້ອງຮັບທາງການຄ້າ - ພາກສ່ວນອື່ນ	4,742,008,559	20,247,062,424
	14,791,183,593	**31,666,041,033**
ຫັກ:ສຳຮອງໜີ້ຕ້ອງຮັບທວງຍາກ	(7,109,476,378)	(7,109,476,378)
ໜີ້ຕ້ອງຮັບທາງການຄ້າ-ສຸດທິ	**7,681,707,215**	**24,556,564,655**

6. ເຄື່ອງໃນສາງ, ສຸດທິ

	2025 ກີບ	2024 ກີບ
ເຄື່ອງໃຊ້ຫ້ອງການ	392,082,604	445,057,781
ບັດເຕີມນ້ຳມັນ Plus card	-	147,067,126
	392,082,604	**592,124,907**
ຫັກ: ສຳຮອງຄ່າເຊື່ອມມູນຄ່າຕາມມູນຄ່າສຸດທິ	-	-
ເຄື່ອງໃນສາງ-ສຸດທິ	**392,082,604**	**592,124,907**

7. ຊັບສິນໝຸນວຽນອື່ນໆ

	2025 ກີບ	2024 ກີບ
ໜີ້ຕ້ອງຮັບ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ທີ 25.3)	197,504,052,264	161,896,352,650
ເງິນຈ່າຍລ່ວງໜ້າໃຫ້ຜູ້ສະໜອງ	1,723,428,462	1,748,611,887
ຈ່າຍລ່ວງໜ້າ	1,443,708,049	2,186,699,855
ເງິນຈ່າຍມັດຈຳໃຫ້ຜູ້ສະໜອງ	4,177,444,645	4,032,853,776
ເງິນຈ່າຍລ່ວງໜ້າໃຫ້ພະນັກງານ	97,000,000	114,500,000
ເງິນຈ່າຍລ່ວງໜ້າສຳລັບອາກອນກຳໄລ	1,146,854,492	1,146,854,492
ຂາດທຶນສຳຖ້າຕັດບັນຊີຈາກອັດຕາແລກປ່ຽນທີ່ບໍ່ເກີດຈິງ	338,647,984,554	320,732,191,444
	544,740,472,466	**491,858,064,104**

8. ຊັບສິນບັດຄີງທີ່ມີຕົວຕົນ-ສຸດທິ

	ທີ່ດິນ ກີບ	ອາຄານ ແລະ ການປັບປຸງ ກີບ	ເຄື່ອງຈັກ ແລະ ອຸປະກອນ ກີບ	ເຄື່ອງໃຊ້ຫ້ອງການ ກີບ	ຍານພາຫະນະ ກີບ	ຊັບສິນພວມກໍ່ສ້າງ ກີບ	ລວມ ກີບ
ວັນທີ 1 ມັງກອນ 2025							
ຕົ້ນທຶນ	386,878,020,951	7,794,453,870	5,233,237,778	20,564,064,689	5,801,208,336	10,804,696,421	437,075,682,045
ຫັກ: ຄ່າຫຼ້ຍຫ້ຽນສະສົມ	-	(2,747,329,252)	(4,325,510,783)	(18,642,850,006)	(4,139,552,370)	-	(29,855,242,411)
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**386,878,020,951**	**5,047,124,618**	**907,726,995**	**1,921,214,683**	**1,661,655,966**	**10,804,696,421**	**407,220,439,634**
ຍອດຍົກມາມູນຄ່າຕາມບັນຊີສຸດທິ	386,878,020,951	5,047,124,618	907,726,995	1,921,214,683	1,661,655,966	10,804,696,421	407,220,439,634
ເພີ່ມຂຶ້ນ	-	-	-	264,330,149	-	-	264,330,149
ຄ່າຫຼ້ຍຫ້ຽນ (ບົດອະທິບາຍ ທີ 21)	-	(334,938,144)	(130,039,217)	(782,799,008)	(185,460,592)	-	(1,433,236,961)
ໂອນອອກ (ບົດອະທິບາຍ ທີ 3)	-	-	-	(292,000)	(1,000)	-	(293,000)
ສ່ວນເພີ່ມຈາກການຕີມູນຄ່າ	33,774,869,747	-	-	-	-	-	33,774,869,747
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**420,652,890,698**	**4,712,186,474**	**777,687,778**	**1,402,453,824**	**1,476,194,374**	**10,804,696,421**	**439,826,109,569**
ວັນທີ 31 ທັນວາ 2025							
ຕົ້ນທຶນ	420,652,890,698	7,794,453,870	5,233,237,778	18,419,491,443	5,787,468,236	10,804,696,421	468,692,238,446
ຫັກ: ຄ່າຫຼ້ຍຫ້ຽນສະສົມ	-	(3,082,267,396)	(4,455,550,000)	(17,017,037,619)	(4,311,273,862)	-	(28,866,128,877)
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**420,652,890,698**	**4,712,186,474**	**777,687,778**	**1,402,453,824**	**1,476,194,374**	**10,804,696,421**	**439,826,109,569**

ຊັບສິນຄີງທີ່ມີຕົວຕົນບາງລາຍການແມ່ນໄດ້ນຳໄປເປັນຫຼັກຊັບຄ້ຳປະກັນສຳລັບເງິນກູ້ຢືມຂອງບໍລິສັດ (ບົດອະທິບາຍຂໍ້ທີ 15)

9. ຊັບສິນຄົງທີ່ ບໍ່ມີຕົວຕົນ-ສຸດທິ

	ໂປແກຼມຄອມພິວເຕີ ກີບ
ຍອດຍົກມາໃນວັນທີ1 ມັງກອນ 2025	
ຕົ້ນທຶນ	8,905,465,400
ຫັກ: ຄ່າເຊື່ອມມູນຄ່າສະສົມ	(7,481,624,586)
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**1,423,840,814**
ຍອດຍົກມາມູນຄ່າຕາມບັນຊີສຸດທິ	1,423,840,814
ເພີ່ມຂຶ້ນ	
ໂອນອອກ (ບົດອະທິບາຍຂໍ້ທີ 3)	(35,000)
ຄ່າເຊື່ອມມູນຄ່າ (ບົດອະທິບາຍຂໍ້ທີ 21)	(892,122,108)
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**531,683,706**
ວັນທີ 31 ທັນວາ 2025	
ຕົ້ນທຶນ	1,980,769,375
ຫັກ: ຄ່າເຊື່ອມມູນຄ່າສະສົມ	(1,449,085,669)
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**531,683,706**

10. ຊັບສິນເພື່ອການລົງທຶນ, ສຸດທິ

	ທີ່ດິນ ກີບ	ອາຄານ ກີບ	ລວມ ກີບ
ວັນທີ 1 ມັງກອນ 2025			
ຕົ້ນທຶນ	194,059,035,920	36,129,158,861	230,188,194,781
ສ່ວນເພີ່ມຈາກການຕີມູນຄ່າ	76,761,009,769	-	76,761,009,769
ກຳໄລສຸດທິຈາກການປັບມູນຄ່າຍຸດຕິທຳ (ບົດອະທິບາຍຂໍ້ທີ 20)	-	94,222,979,707	94,222,979,707
ມູນຄ່າຍັງເຫຼືອໃນວັນທີ 31 ທັນວາ 2025	**270,820,045,689**	**130,352,138,568**	**401,172,184,257**
ຍອດຍົກມາຕາມບັນຊີສຸດທິ	270,820,045,689	130,352,138,568	401,172,184,257
ສ່ວນເພີ່ມຈາກການຕີມູນຄ່າ	9,416,200,857	-	9,416,200,857
ກຳໄລສຸດທິຈາກການປັບມູນຄ່າຍຸດຕິທຳ (ບົດອະທິບາຍຂໍ້ທີ 20)	-	-	-
ມູນຄ່າຍັງເຫຼືອໃນວັນທີ 31 ທັນວາ 2025	**280,236,246,546**	**130,352,138,568**	**410,588,385,114**

ຊັບສິນເພື່ອການລົງທຶນ ແມ່ນ ຊັບສິນປະເພດທີ່ດິນ ແລະ ອາຄານທີ່ຢູ່ໃນນະຄອນຫຼວງວຽງຈັນ, ສ ປປ ລາວ ເຊິ່ງສ່ວນໃຫຍ່ ແມ່ນ ໃຫ້ບໍລິສັດໃນເຄືອເຊົ່າບໍລິການ.

10. ຊັບສິນບັດຄົງທີ່ເພື່ອການລົງທຶນ, ສຸດທິ (ຕໍ່)

ທີ່ດິນບາງສ່ວນແມ່ນໃຊ້ເປັນຫຼັກຊັບຄ้ำປะกันสำลับเงินกู้ยืมของบໍລິสัด (ปิดอะทิบายข้อที่ 15).

11. ການລົງທຶນໃນບໍລິສັດໃນເຄືອ

	2025 ກີບ	2024 ກີບ
ວັນທີ 1 ມັງກອນ	198,000,000,000	198,000,000,000
ເພີ່ມຂຶ້ນ	-	-
ວັນທີ 31 ທັນວາ	**198,000,000,000**	**198,000,000,000**

11. ການລົງທຶນໃນບໍລິສັດໃນເຄືອ (ຕໍ່)

ມູນຄ່າທີ່ຮັບຮູ້ໃນໃບລາຍງານຖານະການເງິນມີດັ່ງລຸ່ມນີ້:

ຊື່ວິສະຫະກິດ	ດຳເນີນງານໃນ ປະເທດ	ກິດຈະກຳຂອງທຸລະກິດ	ສ່ວນເປັນເຈົ້າ ຂອງຖືໂດຍ ບໍລິສັດ		ສ່ວນເປັນເຈົ້າ ຂອງຖືໂດຍ ຜູ້ຖື ຮຸ້ນສ່ວນນ້ອຍ		ການລົງທຶນໃນອົທິຕົ້ນທຶນ	
			2025	2024	2025	2024	2025 ກີບ	2024 ກີບ
ບໍລິສັດ ປີໂຕຣເທຣດ ນຳເຂົ້າ-ສົ່ງອອກ ຈຳກັດ	ສ.ປ.ປ ລາວ	ນຳເຂົ້າ ແລະ ສົ່ງອອກ	99%		1%		148,500,000,000	148,500,000,000
ບໍລິສັດ ປີໂຕຣເທຣດ ດິສທະ ບິວຊັ່ນ ຈຳກັດ	ສ.ປ.ປ ລາວ	ຂາຍຍ່ອຍ ແລະ ຂາຍສົ່ງ	99%		1%		49,500,000,000	49,500,000,000

12. ຊັບສິນບໍ່ໝຸນວຽນອື່ນໆ

	2025 ກີບ	2024 ກີບ
ຈ່າຍລ່ວງໜ້າ*	50,981,485,231	48,818,259,951
ຈ່າຍລ່ວງໜ້າສຳລັບການລົງທຶນ**	23,454,842,997	20,097,842,997
ຈ່າຍລ່ວງໜ້າສຳລັບສະຖານີປ້ຳນ້ຳມັນ ແລະ ອື່ນໆ	961,786,223	1,740,230,703
	75,398,114,451	**70,656,333,651**

*ລາຍຈ່າຍລ່ວງໜ້າສ່ວນໃຫຍ່ປະກອບມີ ຈ່າຍລ່ວງໜ້າໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງຈຳນວນ 34,420 ກີບ (2024: 34,420 ລ້ານກີບ) (ບົດອະທິບາຍຂໍ້ທີ 25.3)

**ຈ່າຍລ່ວງໜ້າສຳລັບການລົງທຶນສ່ວນໃຫຍ່ປະກອບມີຄ່າທີ່ປຶກສາພາຍນອກ ແລະ ລັດຖະບານເປັນຄ່າລ່ວງໜ້າສຳລັບການລົງທຶນທີ່ກ່ຽວຂ້ອງກັບ ໂຄງການທາງລົດໄຟ ວຽງຈັນ- ຫວຽ ອໍ້ ເຊິ່ງໃນປັດຈຸບັນແມ່ນຢູ່ໃນຂັ້ນຕອນການສຶກສາຄວາມເປັນໄປໄດ້ ແລະ ພັດທະນາ. ຍອດທີ່ລົງທຶນທັງໝົດໃນວັນທີ 31 ທັນວາ 2025 ແມ່ນ XXXX ກີບ.

13. ໜີ້ຕ້ອງສົ່ງທາງການຄ້າ

	2025 ກີບ	2024 ກີບ
ໜີ້ຕ້ອງສົ່ງທາງການຄ້າ - ພາກສ່ວນອື່ນ	4,148,647,699	6,024,449,760
ໜີ້ຕ້ອງສົ່ງທາງການຄ້າ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ທີ 25.3)	5,042,164,775	4,562,005,458
	9,190,812,474	**10,586,455,218**

14. ໜີ້ຕ້ອງສົ່ງອາກອນ

	2025 ກີບ	2024 ກີບ
ໜີ້ຕ້ອງສົ່ງອາກອນມູນຄ່າເພີ່ມ	3,676,361,150	3,495,035,634
ໜີ້ຕ້ອງສົ່ງອາກອນລາຍຮັບສ່ວນບຸກຄົນ	107,212,169	102,218,175
	3,783,573,319	**3,597,253,809**

15. ເງິນກູ້ຢືມ

	2025 ກີບ	2024 ກີບ
ໝຸນວຽນ		
ສ່ວນໝຸນວຽນຂອງເງິນກູ້ຢືມໄລຍະຍາວຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ທີ 25.4)	8,261,400,000	7,624,800,000
ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ທີ 25.4)	190,482,280,873	188,420,280,680
	198,743,680,873	**196,045,080,680**
ບໍ່ໝຸນວຽນ		
ເງິນກູ້ຢືມຈາກສະຖາບັນການເງິນ-ພາກສ່ວນທີ່ກ່ຽວຂ້ອງ(ບົດອະທິບາຍຂໍ້ທີ 25.4)	500,962,346,150	-
ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ທີ 25.4)	160,315,954,896	630,300,366,695
	661,278,301,046	**630,300,366,695**
	860,021,981,919	**826,345,447,375**

ການເຄື່ອນໄຫວຂອງເງິນກູ້ຢືມສາມາດວິເຄາະໄດ້ດັ່ງລຸ່ມນີ້

	2025 ກີບ	2024 ກີບ
ວັນທີ 1 ມັງກອນ	826,345,447,375	808,655,564,764
ເງິນກູ້ຢືມໄດ້ຮັບພາຍໃນປີ	-	477,406,261,710
ເງິນກູ້ຢືມໄດ້ຊຳລະຄືນພາຍໃນປີ	(8,349,720,000)	(462,333,309,732)
ຂາດທຶນຈາກອັດຕາແລກປ່ຽນທີ່ຍັງບໍ່ເກີດຈິງ	42,026,254,544	2,616,930,633
ວັນທີ 31 ທັນວາ	**860,021,981,919**	**826,345,447,375**

15. ເງິນກູ້ຢືມ (ຕໍ່)

ຜູ້ໃຫ້ກູ້ຢືມ	ເງື່ອນໄຂການຊຳລະ	ໄລຍະເວລາເບື້ອງຕົ້ນ	ວົງເງິນກູ້	ອັດຕາດອກເບ້ຍຕໍ່ປີ	ໜັກຊັບຄ້ຳປະກັນ	ຍອດເຫຼືອໃນວັນທີ 31 ທັນວາ 2024
ບໍລິສັດ ບ໋ອລະພາ ຈຳກັດ	ຕົ້ນທຶນ ແລະ ດອກເບ້ຍຈະຕ້ອງຊຳລະຕາມການຮຽກຮ້ອງຂອງຜູ້ໃຫ້ກູ້	29 ທັນວາ 2019 ເປັນຕົ້ນໄປ	4,398,535 ໂດລາ	0%	ບໍ່ມີ	3,324,369 ໂດລາ (ທຽບເທົ່າ 72,667,382,847 ກີບ)
ບໍລິສັດ ປິໂຕຣເທຣດ ນຳເຂົ້າ-ສົ່ງອອກ ຈຳກັດ	ຕົ້ນທຶນ ແລະ ດອກເບ້ຍຈະຕ້ອງຊຳລະຕາມການຮຽກຮ້ອງຂອງຜູ້ໃຫ້ກູ້	11 ເມສາ 2023 ເປັນຕົ້ນໄປ 25 ທັນວາ 2021 ເປັນຕົ້ນໄປ	66,697,256,733 ກີບ 1,302,300 ໂດລາ 51,51,000 ບາດ	10% 9% 9%	ບໍ່ມີ	LAK 54,276,256,733 1,302,300 ໂດລາ 51,951,000 ບາດ (ທຽບເທົ່າ 61,476,641,100 ກີບ)
ບໍລິສັດ ປິໂຕຣເທຣດ ນຳເຂົ້າ-ສົ່ງອອກ ຈຳກັດ	ຕົ້ນທຶນ ແລະ ດອກເບ້ຍຈະຕ້ອງຊຳລະຕາມໃນມື້ຄົບກຳນົດ	25 ທັນວາ 2023 – 25 ທັນວາ 2028	160,315,954,896 ກີບ	0%	ບໍ່ມີ	160,315,954,896 ກີບ
ທະນາຄານ ພັ[illegible]ວັນ	ຕົ້ນທຶນ: ຊຳລະທຸກເດືອນຕາມ "ຕາຕະລາງຊຳລະເງິນກູ້" ດອກເບ້ຍ: ຊຳລະທຸກເດືອນ	26 ທັນວາ 2024 – 26 ທັນວາ 2029	752,900,000 ບາດ	11%	- ດິນ ແລະ ອາຄານ 11 ແຫ່ງ - ສັນຍາສະໜອງນ້ຳມັນແກ່ບໍລິສັດພຸເບ້ຍ ຈຳກັດ, ບໍລິສັດ ຢຸນນານ ການກໍ່ສ້າງ ແລະ ການລົງທຶນ (ລາວ) ຈຳກັດຜູ້ດຽວ - ດິນ ແລະ ປ້ຳນ້ຳມັນ 7 ແຫ່ງ ຂອງບໍລິສັດ ດິສທີບິວຊັນ ຈຳກັດ - ດິນ ແລະ ປ້ຳນ້ຳມັນ 9 ແຫ່ງ ຂອງບໍລິສັດ ປິໂຕລ້ຽມ ເທດດິ້ງລາວ ມະຫາຊົນ	752,900,000 ບາດ (ທຽບເທົ່າ 509,223,746,151 ກີບ)
					ລວມ	**4,626,669 ໂດລາ** **791,618,00ບາດ** **(ທຽບເທົ່າ 860,021,981,919 ກີບ)**

15. ເງິນກູ້ຢືມ (ຕໍ່)

ອັດຕາດອກເບ້ຍເງິນກູ້ຢືມຂອງ ບໍລິສັດ ມີດັ່ງຕໍ່ໄປນີ້:

	2025 ກີບ	2024 ກີບ
ເງິນກູ້ຢືມ		
- ອັດຕາດອກເບ້ຍຄົງທີ່	860,021,981,919	826,345,447,375
ລວມເງິນກູ້ຢືມ	**860,021,981,919**	**826,345,447,375**

ມູນຄ່າສັນຍາເງິນກູ້ຢືມແບ່ງຕາມມື້ຄົບກຳນົດ ມີດັ່ງຕໍ່ໄປນີ:

	2025 ກີບ	2024 ກີບ
ໃນລະຫວ່າງ 1 ເຖິງ 2 ປີ	198,743,680,873	188,420,280,680
ໃນລະຫວ່າງ 2 ເຖິງ 5 ປີ	661,278,301,046	637,925,166,695
	860,021,981,919	**826,345,447,375**

16. ໜີ້ສິນໝຸນວຽນອື່ນໆ

	2025 ກີບ	2024 ກີບ
ເງິນລ່ວງໜ້າຈາກລູກຄ້າ	1,430,986,536	14,506,505,676
ໜີ້ຄ້າງຈ່າຍ ແລະ ຫນີ້ຕ້ອງສົ່ງອື່ນໆ	7,612,578,149	7,445,988,472
ໜີ້ຕ້ອງສົ່ງອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ທີ 25.3)	344,049,464,237	231,287,514,689
ກຳໄລຈາກອັດຕາແລກປ່ຽນທີ່ບໍ່ໄດ້ເກີດຈິງ	49,908,351,713	77,826,934,575
	403,001,380,635	**331,066,943,412**

17. ທຶນຈົດທະບຽນ ແລະ ສ່ວນເພີ່ມມູນຄ່າຮຸ້ນ

	ຈຳນວນຮຸ້ນ ຮຸ້ນ	ຮຸ້ນສາມັນ ກີບ	ສ່ວນເພີ່ມມູນຄ່າ ຮຸ້ນ ກີບ	ລວມ ກີບ
ວັນທີ 1 ມັງກອນ 2024	235,000,000	470,000,000,000	27,638,932,340	497,638,932,340
ການອອກຮຸ້ນໃໝ່	-	-	-	-
ວັນທີ 31 ທັນວາ 2024	**235,000,000**	**470,000,000,000**	**27,638,932,340**	**497,638,932,340**
ວັນທີ 1 ມັງກອນ 2025	235,000,000	470,000,000,000	27,638,932,340	497,638,932,340
ການອອກຮຸ້ນໃໝ່	-	-	-	-
ວັນທີ 31 ທັນວາ 2025	**235,000,000**	**470,000,000,000**	**27,638,932,340**	**497,638,932,340**

18. ຄັງສະສົມຕາມລະບຽບການ

ຄັງສະສົມຕາມລະບຽບການ ແມ່ນສ້າງຂຶ້ນຕາມກົດໝາຍວິສາຫະກິດຂອງ ສປປ ລາວ ເຊິ່ງກຳນົດການຈັດສັນກຳໄລຕາມກົດໝາຍຢ່າງໜ້ອຍ 10% ຂອງກຳໄລສຸດທິປະຈຳປີ, ພາຍຫຼັງຫັກອອກຂາດທຶນສະສົມ (ຖ້າມີ) ຈົນກ່ວາຄັງສຳຮອງດັ່ງກ່າວບັນລຸ 50% ຈົນກວ່າຄັງສະສົມດັ່ງກ່າວບັນລຸ 50% ຂອງມູນຄ່າທຶນຈົດທະບຽນ.

ລະຫວ່າງປີ ແມ່ນບໍ່ມີການການເຄື່ອນໄຫວຂອງ ຄັງສະສົມຕາມລະບຽບການ, ຍອດຄົງເຫລືອວັນທີ 31 ທັນວາ 2025 ແມ່ນ 3,708 ກີບ (2024: 3,708 ກີບ).

19. ລາຍຮັບ

	2025 ກີບ	2024 ກີບ
ລາຍຮັບຈາກການບໍລິການບັດ Plus card	-	2,298,834,391

ໃນລະຫວ່າງປີບໍລິສັດໄດ້ໂອນທຸກຊັບສິນຂອງ Plus Card ໄປໃຫ້ FINA (ບົດອະທິບາຍ 3)

20. ລາຍຮັບອື່ນໆ

	2025 ກີບ	2024 ກີບ
ລາຍຮັບຄ່າເຊົ່າ (ບົດອະທິບາຍຂໍ້ທີ 25.1)	16,804,344,957	15,853,133,878
ລາຍຮັບດອກເບ້ຍ (ບົດອະທິບາຍຂໍ້ທີ 25.1)	2,961,430,768	2,034,177,370
ກຳໄລຈາກມູນຄ່ຍຸດຕິທຳຂອງຊັບສິນເພື່ອການລົງທຶນ (ບົດອະທິບາຍຂໍ້ທີ 10)	-	94,222,979,707
ລາຍຮັບອື່ນໆ	218,088,909	366,156,100
	19,983,864,634	**112,476,447,055**

21. ລາຍຈ່າຍຈຳແນກຕາມລັກສະນະເນື້ອໃນ

	2025 ກີບ	2024 ກີບ
ຕົ້ນທຶນຄ່າແຮງງານ	9,847,348,886	9,257,982,146
ລາຍຈ່າຍໃນການດຳເນີນງານ ສຳລັບຫ້ອງການຜູ້ຕາງໜ້າ	5,165,509,782	4,676,978,645
ຄ່າຫຼ້ຍຫ້ຽນ ແລະ ເຊື່ອມມູນຄ່າ (ບົດອະທິບາຍຂໍ້ທີ 8,9,10)	2,325,359,069	5,149,941,790
ຄ່າທຳນຽມທະນາຄານ	2,148,993,984	1,355,279,504
ຄ່າທີ່ປຶກສາ*	2,103,242,185	1,448,539,828
ລາຍຈ່າຍຄ່າສ້ອມແປງ ແລະ ບຳລຸງຮັກສາ	1,017,173,788	1,550,358,287
ລາຍຈ່າຍຄ່າເຊົ່າ	990,171,337	790,145,501
ລາຍຈ່າຍຂອງການຂາຍນ້ຳມັນເຊື້ອໄຟ	-	86,607,381
ລາຍຈ່າຍໃນການຂາຍ	-	44,519,366

*. ຄ່າທີ່ປຶກສາປະກອບດ້ວຍຄ່າກວດສອບບັນຊີປະຈຳປີ 993 ລ້ານກີບ (2024: 940 ລ້ານກີບ).

22. ລາຍຈ່າຍການເງິນ

	2025 ກີບ	2024 ກີບ
ລາຍຈ່າຍດອກເບ້ຍ-ພາກສ່ວນກ່ຽວຂ້ອງ (ບົດອະທິບາຍຂໍ້ທີ 25.2).	63,754,260,719	48,119,979,409
ລາຍຈ່າຍດອກເບ້ຍ-ບໍລິສັດໃນເຄືອ (ບົດອະທິບາຍຂໍ້ທີ 25.2).	11,224,914,633	11,209,655,613
	74,979,175,352	**59,329,635,022**

23. ອາກອນກຳໄລ

ອີງຕາມກົດໝາຍສ່ວຍສາອາກອນສະບັບເລກທີ 259 ມີຜົນບັງຄັບໃຊ້ໃນວັນທີ 1 ມັງກອນ 2020, ບໍລິສັດໄດ້ຄິດໄລ່ອາກອນກຳໄລ ຈາກລາຍຮັບ ອັດຕາ 20% (2024: 20%) ຫຼັງຈາກພິຈາລະນາລາຍຮັບ ແລະ ລາຍຈ່າຍທີ່ບໍ່ສາມາດຫັກອອກໄດ້ແມ່ນສອດຄ່ອງ ກັບກົດໝາຍວ່າດ້ວຍສ່ວຍສາອາກອນ. ສຳລັບປີສິ້ນສຸດວັນທີ 31 ທັນວາ 2025, ບໍ່ມີກຳໄລທີ່ຕ້ອງເສຍອາກອນ, ດັ່ງນັ້ນຄ່າອາກອນ ລາຍໄດ້ເທົ່າກັບສູນ.

24. ກຳໄລ/(ຂາດທຶນ)ພື້ນຖານຕໍ່ຮຸ້ນ

ພື້ນຖານການຄິດໄລ່ກຳໄລ/(ຂາດທຶນ)ຕໍ່ຮຸ້ນ ແມ່ນຄິດໄລ່ຈາກການແບ່ງກຳໄລສຸດທິ ໃຫ້ຜູ້ຖືຮຸ້ນດ້ວຍວິທີການສະເລ່ຍຂອງຈຳນວນຮຸ້ນ ສາມັນທີ່ອອກທັ້ງໝົດ.

	2025	2024
ກຳໄລ/(ຂາດທຶນ) ສຸດທິຂອງຜູ້ຖືຮຸ້ນ (ກີບ)	(78,600,088,024)	23,625,111,621
ຈຳນວນຮຸ້ນ ສະເລ່ຍຕາມຮຸ້ນສາມັນທີ່ອອກທັ້ງໝົດ (ຮຸ້ນ)	235,000,000	235,000,000
ກຳໄລ/(ຂາດທຶນ)ຕໍ່ຮຸ້ນ (ກີບ)	(334)	101

25. ພາກສ່ວນທີ່ກ່ຽວຂ້ອງ

ນິຕິບຸກຄົນ ແລະ ບຸກຄົນ ທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມ ພາຍໃຕ້ການຄວບຄຸມຂອງ ບໍລິສັດ ລວມເຖິງການລົງທຶນໃນນິຕິບຸກຄົນ ແລະ ບຸກຄົນ ຫຼື ນິຕິບຸກຄົນ ມີອິດທິພົນຫຼາຍຕໍ່ກັບ ບໍລິສັດ. ຜູ້ບໍລິຫານຫຼັກ ລວມມີ ຜູ້ອຳນວຍການ ແລະ ພະນັກງານຂອງ ບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ລວມເຖິງບັນດາບໍລິສັດ ທີ່ກ່ຽວຂ້ອງກັບບຸກຄົນເຫຼົ່ານີ້ ແມ່ນຖືເປັນພາກສ່ວນ ທີ່ກ່ຽວຂ້ອງ.

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງ ສາຍສຳພັນທີ່ແທ້ຈິງ, ບໍ່ໄດ້ ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

ລາຍການທີ່ສຳຄັນລຸ່ມນີ້ແມ່ນມີການພົວພັນກັບພາກສ່ວນທີ່ກ່ຽວຂ້ອງ

25. ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

25.1 ການຂາຍສິນຄ້າ ແລະ ບໍລິການ

	2025 ກີບ	2024 ກີບ
ຂາຍບໍລິການໃຫ້ແກ່:		
ບໍລິສັດໃນເຄືອ (ປົດອະທິບາຍຂໍ້ທີ 20)		
ຄ່າເຊົ່າ	1,981,803,390	1,792,040,192
ພາກສ່ວນທີ່ກ່ຽວຂ້ອງອື່ນໆ (ປົດອະທິບາຍຂໍ້ທີ 20)		
ລາຍຮັບດອກເບ້ຍ	2,961,329,458	2,034,177,370
ຄ່າເຊົ່າ	14,822,541,567	14,061,093,686
	19,765,674,415	**17,887,311,248**

25.2 ການຊື້ສິນຄ້າ ແລະ ບໍລິການ

	2025 ກີບ	2024 ກີບ
ຊື້ບໍລິການຈາກ:		
ບໍລິສັດໃນເຄືອ		
ລາຍຈ່າຍດອກເບ້ຍ (ປົດອະທິບາຍຂໍ້ທີ 22)	11,224,914,633	11,209,655,613
ພາກສ່ວນທີ່ກ່ຽວຂ້ອງ		
ລາຍຈ່າຍດອກເບ້ຍ (ປົດອະທິບາຍຂໍ້ທີ 22)	63,754,260,719	48,119,979,409
	74,979,175,352	**59,329,635,022**

25. ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

25.3 ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ / ຊື້ສິນຄ້າ / ບໍລິການ

	2025 ກີບ	2024 ກີບ
ໜີ້ຕ້ອງຮັບຈາກ:		
ໜີ້ຕ້ອງຮັບທາງການຄ້າຈາກ (ບົດອະທິບາຍຂໍ້ທີ 5)		
ພາກສ່ວນທີ່ກ່ຽວຂ້ອງອື່ນໆ	10,049,175,034	11,418,978,609
	10,049,175,034	**11,418,978,609**
ຊັບສິນໝຸນວຽນອື່ນໆ (ບົດອະທິບາຍຂໍ້ທີ 7)		
ບໍລິສັດໃນເຄືອ		
ໜີ້ຕ້ອງຮັບຈາກການປະກອບທຶນ	36,381,418,199	36,368,330,104
ໜີ້ຕ້ອງຮັບອື່ນໆຈາກພາກສ່ວນທີ່ກ່ຽວຂ້ອງ	16,735,053,261	10,583,584,787
	53,116,471,460	**46,951,914,891**
ຜູ້ບໍລິຫານຫຼັກ		
ໜີ້ຕ້ອງຮັບອື່ນໆ ຈາກສ່ວນເພີ່ມມູນຄ່າຮຸ້ນ	22,497,682,340	22,497,682,340
ໜີ້ຕ້ອງຮັບອື່ນໆ ຈາກການຂາຍຍານພາຫະນະ	16,149,973,862	16,149,973,862
ໜີ້ຕ້ອງຮັບ ດອກເບ້ຍ	158,228,181	81,860,397
	38,805,884,383	**38,729,516,599**
ພາກສ່ວນທີ່ກ່ຽວຂ້ອງອື່ນໆ		
ໜີ້ຕ້ອງຮັບ ດອກເບ້ຍ	23,756,569,739	20,635,465,136
ເງິນລ່ວງໜ້າ ໃຫ້ພາກສ່ວນທີ່ກ່ຽວຂ້ອງ	39,657,475,179	27,651,196,075
ໜີ້ຕ້ອງຮັບອື່ນໆ ຈາກການບໍລິການຄ່າເຊົ່າ	42,325,879,684	27,928,259,949
	105,581,696,421	**76,214,921,160**
ລວມໜີ້ຕ້ອງຮັບທັງໝົດ (ບົດອະທິບາຍຂໍ້ທີ 7)	**197,504,052,264**	**161,896,352,650**
ຊັບສິນບໍ່ໝຸນວຽນອື່ນໆ (ບົດອະທິບາຍຂໍ້ທີ 12)		
ຜູ້ບໍລິຫານຫຼັກ		
ຈ່າຍລ່ວງໜ້າ	34,419,839,505	34,419,839,505
	34,419,839,505	**34,419,839,505**

25. ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

25.3 ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ / ຊື້ສິນຄ້າ / ບໍລິການ (ຕໍ່)

	2025 ກີບ	2024 ກີບ
ໜີ້ຕ້ອງສົ່ງໃຫ້ແກ່:		
ໜີ້ຕ້ອງສົ່ງການຄ້າຈາກ (ປົດອະທິບາຍຂໍ້ທີ 13)		
ບໍລິສັດໃນເຄືອ	4,599,215,887	3,864,559,266
ພາກສ່ວນທີ່ກ່ຽວຂ້ອງອື່ນໆ	442,948,888	697,446,192
	5,042,164,775	**4,562,005,458**
ໜີ້ສິນໝຸນວຽນອື່ນໆ (ປົດອະທິບາຍຂໍ້ທີ 16)		
ບໍລິສັດໃນເຄືອ		
ໜີ້ຕ້ອງສົ່ງຈາກການປະກອບທຶນ	56,306,694,922	56,306,694,922
ຍອດຄ້າງຊຳລະ ແລະ ດອກເບ້ຍຄ້າງຈ່າຍ	37,820,793,170	25,473,383,013
ເງິນລ່ວງໜ້າຈາກພາກສ່ວນທີ່ກ່ຽວຂ້ອງ	31,084,257,343	147,843,480,070
	125,211,745,435	**229,623,558,005**
ພາກສ່ວນທີ່ກ່ຽວຂ້ອງອື່ນໆ		
ຍອດຄ້າງຊຳລະ ລາຍຈ່າຍດອກເບ້ຍ	658,206,492	651,967,812
ເງິນລ່ວງໜ້າຈາກພາກສ່ວນທີ່ກ່ຽວຂ້ອງ	218,179,512,310	1,011,988,872
	218,837,718,802	**1,663,956,684**
	344,049,464,237	**231,287,514,689**

25.4 ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງ

	2025 ກີບ	2024 ກີບ
ວັນທີ 1 ມັງກອນ	826,345,447,375	808,655,564,764
ເງິນກູ້ຢືມໄດ້ຮັບພາຍໃນປີ	-	477,406,261,710
ເງິນກູ້ຢືມໄດ້ຊຳລະຄືນພາຍໃນປີ	(8,349,720,000)	(462,333,309,732)
ຂາດທຶນຈາກອັດຕາແລກປ່ຽນທີ່ຍັງບໍ່ເກີດຈິງ	42,026,254,544	2,616,930,633
ວັນທີ 31 ທັນວາ	**860,021,981,919**	**826,345,447,375**

25. ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

25.5 ເງິນໃຫ້ກູ້ຢືມແກ່ພາກສ່ວນທີ່ກ່ຽວຂ້ອງ

	2025 ກີບ	2024 ກີບ
ວັນທີ 1 ມັງກອນ	152,658,377,836	145,733,311,964
ເງິນກູ້ຢືມໄດ້ຮັບຊຳລະຄືນພາຍໃນປີ	-	-
ກຳໄລຈາກອັດຕາແລກປ່ຽນທີ່ຍັງບໍ່ເກີດຈິງ	72,176,320	6,925,065,872
ວັນທີ 31 ທັນວາ	**152,730,554,156**	**152,658,377,836**

25.6 ຄ່າຕອບແທນຂອງຜູ້ບໍລິຫານຫຼັກ

ຄ່າຕອບແທນຈ່າຍໃຫ້ຜູ້ບໍລິຫານຫຼັກມີດັ່ງລຸ່ມນີ້:

	2025 ກີບ	2024 ກີບ
ເງິນເດືອນ ແລະ ອື່ນໆ	4,517,014,863	4,995,192,430

26. ເຫດການທີ່ເກີດຂຶ້ນຫຼັງວັນທີບົດລາຍງານການເງິນ

ບໍ່ມີເຫດການສຳຄັນຫຼັງວັນທີໃນບົດລາຍງານການເງິນທີ່ອາດສົ່ງຜົນກະທົບຢ່າງມີໃນສຳຄັນຕໍ່ຕົວເລກໃນງົບການເງິນຂອງບໍລິສັດ.